ພະຍາຫອນ ວຽງຈັນ
23–32°C
ວັນອັງຄານ 17/11 · ມີຝົນ

ມະຫາສານ

ລາຍວັນ ◆ MAHAXAN DAILY ◆ mahaxan.com

ໂຄສະນາ
ພື້ນທີ່ໂຄສະນາ
44 × 25 ມມ · ຕິດຕໍ່ WhatsApp 020 5888 6182

ວັນອັງຄານ 17 ພະຈິກ 2026 · ສະບັບທີ 023 | ສະຫຼຸບຂ່າວປະຈຳວັນຈັນ 16 ພະຈິກ 2026 · 24 ຂ່າວ | 21 ໜ້າ · ອ່ານຟຣີ · ສົ່ງຕໍ່ໃຫ້ໝູ່ໄດ້

◆ **ເຫດການ** · 10:40 ໂມງ · ອ່ານ 20 ຄັ້ງ

ສະເທືອນຂວັນ! ພົບສົບເພດຊາຍຖືກຄາດຕະກຳຍັດໃສ່ຖົງດຳ ຖິ້ມໄວ້ຫຼັງຫ້ອງນ້ຳ ຢູ່ສາມຫຼ່ຽມຄຳ ແຂວງບໍ່ແກ້ວ”




ໃນວັນທີ 15 ພະຈິກ 2026 ທີ່ຜ່ານມາ ໄດ້ມີການພົບເຫັນສົບຂອງຜູ້ເສຍຊີວິດເພດຊາຍ ໃນສະພາບຖືກຄາດຕະກຳ ແລະ ຖືກນຳມາຍັດໃສ່ຖົງດຳ ປະຖິ້ມໄວ້ຢູ່ບໍລິເວນດ້ານຫຼັງຫ້ອງນ້ຳ ພາຍໃນເຂດສາມຫຼ່ຽມຄຳ ແຂວງບໍ່ແກ້ວ.

ຈາກການກວດກາໃນເບື້ອງຕົ້ນ ຍັງບໍ່ທັນຊາບຂໍ້ມູນສ່ວນຕົວຂອງຜູ້ເສຍຊີວິດວ່າເປັນຄົນມາຈາກເມືອງໃດ ຫຼື ແຂວງໃດ. ປັດຈຸບັນ ທາງເຈົ້າໜ້າທີ່ຕຳຫຼວດທີ່ກ່ຽວຂ້ອງກຳລັງລົງພື້ນທີ່ເພື່ອເກັບກຳຫຼັກຖານ, ຊັນນະສູດພິກສົບ ແລະ ດຳເນີນການສືບສວນ-ສອບສວນຢ່າງ

ຕໍ່ໜ້າ 2

◆ **ຂ່າວຕ່າງປະເທດ** · 16:16 ໂມງ

ອຸທາຫອນ! ເດັກຍິງຄົນຈີນ ອາຍຸພຽງ 13 ປີ ປ່ວຍເປັນມະເຮັງກະເພาะอาหารไลยะสุดท้าย ຫຼັງເຈັບທ້ອງມາດົນ 1 ປີ ແຕ່ຄອບຄົວຄິດວ່າເປັນພຽງອາຫານບໍ່ຍ່ອຍ ຮູ້ອີກເທື່ອລຸກລາມໜັກແລ້ວ!



ວັນທີ 14 ພະຈິກ 2026 ແພດໄດ້ເຜີຍແຜ່ກໍລະນີເຕືອນໃຈ ຫຼັງຈາກເດັກຍິງຊາວຈີນ ອາຍຸ 13 ປີ ຖືກກວດພົບວ່າເປັນມະເຮັງກະเพาะอาหารในไลยะลุกลามรุนแรง ຫຼັງຈາກມີອາການປວດທ້ອງ ແລະ ທ້ອງອືດຕິດຕໍ່ກັນປະมาน 1 ປີ.

ແຕ່ຄອບຄົວເຂົ້າໃຈວ່າເປັນພຽງບັນหาละบบย่อยอาหาร ຈຶ່ງບໍ່ໄດ້ພາໄປພົບแพด จินกะทั่งอาหารอุดโฮมลิ้ง

ຕໍ່ໜ້າ 2

ໃນສະບັບນີ້


2 ເຫດການ
2 ຂ່າວພາຍໃນ
8 ເສດຖະກິດ-ສັງຄົມ
10 ທ່ອງທ່ຽວ
11 ເຕັກໂນໂລຊີ
12 ຂ່າວຕ່າງປະເທດ
20 ມະຫາສານ ມື້ນີ້: ນ້ຳມັນ, ເງິນ, ຄຳ, ຫວຍ, ອากาศ
21 ທ້າຍສະບັບ



◆ **ເສດຖະກິດ-ສັງຄົມ** · 10:16 ໂມງ

ข่าวถิปะชาชื่น! ไฟฟ้าลาว ยิกเอิ้น อากอบมูนถ่าเพิ่ม...

ອ່ານໜ້າ 8 ▸



◆ **ຂ່າວຕ່າງປະเทด** · 11:00 ໂมง

ท่าเรือมิอฮัลิน ยื่น ฟ้องเอิ้นถ่าเสยหาย 1 ล้านโดลา ฐังเธ็...

ອ່ານໜ້າ 12 ▸



◆ **ເສດຖະກິດ-ສັງຄົມ** · 10:28 ໂมง

เลิ่มมื้นี้ 16 พะจิก 2026! ทางหลวงเลก 9 เปิดเกับถ่าเซ่าน...

ອ່ານໜ້າ 8 ▸

ໂຄສະນາ
ให้แบธมะของท่าน ยู่หน้า 1 ทุกเช้า
โถสะนาใน มะหาสาน ลายอัน — หนังสือพิม PDF ที่ถิ่นลาวดาวโหลด และ ธับทางอิเมอ ทุกเช้า
WhatsApp 020 5888 6182

ສະເທືອນຂວັນ! ພົບສົບເພດຊາຍຖືກຄາດຕະກຳຍັດໃສ່ຖົງດຳ ຖິ... (ຕໍ່ຈາກໜ້າ 1)

ລະອຽດ ເພື່ອລະບຸຕົວຕົນຂອງຜູ້ເສຍຊີວິດ ພ້ອມທັງຕິດຕາມຫາຕົວຜູ້ກໍ່ເຫດມາດຳເນີນຄະດີຕາມກົດໝາຍ.

ສຳລັບຄວາມຄືບໜ້າ ແລະ ລາຍລະອຽດເພີ່ມເຕີມຂອງຄະດີດັ່ງກ່າວ ທາງທີມງານຈະນຳມາລາຍງານໃຫ້ຊາບຕື່ມໃນພາຍຫຼັງ.

ອຸທາຫອນ! ເດັກຍິງຄົນຈີນ ອາຍຸພຽງ 13 ປີ ປ່ວຍເປັນມະເຮັງກະ... (ຕໍ່ຈາກໜ້າ 1)

ຢ່າງໜັກ.

ແຫຼ່ງຂ່າວ (Source): HK01 – 01 (ສື່ຂ່າວຈາກຮົ່ງກົ່ງ)

ເມື່ອເຂົ້າຮັບການກວດສະແກນຮ່າງກາຍດ້ວຍເຄື່ອງເອັກຊເຣຄອມພິວເຕີ (CT Scan) ແພດພົບກ້ອນເນື້ອມະເຮັງຢູ່ໃນກະເພາະອາຫານ ແລະ ພົບວ່າມະເຮັງໄດ້ແຜ່ກະຈາຍໄປຍັງຕັບ, ຊ່ອງທ້ອງ, ບໍລິເວນຫຼັງເຍື່ອບຸຊ່ອງທ້ອງ, ເນື້ອເຍື່ອໄຂມັນໃນຊ່ອງທ້ອງ ລວມທັງຮອຍໄຂ່ທັງສອງຂ້າງ.

ຜົນການກວດຢືນຢັນວ່າ ເດັກຍິງຄົນນີ້ເປັນ ມະເຮັງກະເພາະອາຫານຊະນິດ Signet-Ring Cell Carcinoma ຫຼື ມະເຮັງຊະນິດເຊວວົງແຫວນຕາປະທັບ ເຊິ່ງເປັນມະເຮັງທີ່ມີຄວາມຮຸນແຮງ ແລະ ສາມາດແຜ່ກະຈາຍໄດ້ຢ່າງວ່ອງໄວ.

ແພດລະບຸວ່າ ເນື່ອງຈາກມະເຮັງໄດ້ລຸກລາມໄປຫຼາຍອະໄວຍະວະແລ້ວ ເຮັດໃຫ້ຜູ້ປ່ວຍສູນເສຍໂອກາດໃນການຜ່າຕັດເພື່ອຮັກສາໃຫ້ຫາຍຂາດ.

ພຶດຕິກຳການກິນອາຫານ

ຈາກການສອບຖາມປະຫວັດ ພົບວ່າເດັກຍິງມີພຶດຕິກຳມັກກິນອາຫານເຄັມ ແລະ ອາຫານແປຮຸບເປັນປະຈຳ ເຊັ່ນ:

ອາຫານໝັກດອງ ແມ່ນອາຫານທີ່ຜ່ານການໝັກ ຫຼື ດອງໄວ້ເພື່ອຖະໜອມອາຫານ

ພາບປະກອບຕົວຢ່າງ

ອາຫານທີ່ຖະໜອມດ້ວຍເກືອ ແມ່ນອາຫານທີ່ໃຊ້ເກືອໃນການຮັກສາອາຫານໃຫ້ເກັບໄວ້ໄດ້ດົນ

ພາບປະກອບຕົວຢ່າງ

ອາຫານສຳເລັດຮຸບ ແມ່ນອາຫານທີ່ຜ່ານການປຸງແຕ່ງ ຫຼື ຜະລິດຈາກໂຮງງານເພື່ອໃຫ້ສະດວກໃນການຮັບປະທານ

ພາບປະກອບຕົວຢ່າງ

ອາຫານປະເພດປີ້ງ ແມ່ນອາຫານທີ່ນຳວັດຖຸດິບມາປຸງໃຫ້ສຸກດ້ວຍຄວາມຮ້ອນຈາກໄຟ ຫຼື ຖ່ານ ຈີ່ ຫລື ປີ້ງ ຫລື ດາດ.

ພາບປະກອບຕົວຢ່າງ

ນອກຈາກນີ້ ຍັງກວດພົບເຊື້ອແບັກທີເຣຍ Helicobacter pylori (H. pylori) ເຊິ່ງເປັນເຊື້ອທີ່ສາມາດຕິດຕໍ່ຜ່ານການສຳຜັດໃກ້ຊິດ ຫຼື ຜ່ານອາຫານ ແລະ ນ້ຳທີ່ປົນເປື້ອນເຊື້ອ.

ເຊື້ອດັ່ງກ່າວສາມາດເຮັດໃຫ້ເຍື່ອບຸກະເພາະອາຫານອັກເສບ ແລະ ເພີ່ມຄວາມສ່ຽງຕໍ່ການເກີດພະຍາດບາງຊະນິດຂອງກະເພາະອາຫານ.

ຄຳເຕືອນຈາກແພດ

ຜູ້ອຳນວຍການແພດແຜນກະເພາະ ແລະ ລຳໄສ້ຂອງໂຮງໝໍ ໄດ້ເຕືອນພໍ່ແມ່ຜູ້ປົກຄອງວ່າ ຢ່າຄິດວ່າເດັກທີ່ຍັງອາຍຸນ້ອຍຈະບໍ່ມີໂອກາດປ່ວຍເປັນພະຍາດຮ້າຍແຮງ.

ຖ້າລູກມີອາການປວດທ້ອງຊ້ຳໆ, ທ້ອງອືດ ຫຼື ເບື່ອອາຫານຕິດຕໍ່ກັນເປັນເວລາດົນ ຄວນຮີບພາໄປພົບແພດເພື່ອກວດຫາສາເຫດ.

ພ້ອມທັງແນະນຳໃຫ້ຫຼຸດການກິນອາຫານທີ່ເຄັມຈັດ ແລະ ອາຫານໝັກດອງ ໃສ່ໃຈເລື່ອງໂພຊະນາການ ແລະ ກວດສຸຂະພາບຕາມຄວາມເໝາະສົມ.

ທັງນີ້ ພຶດຕິກຳການກິນອາຫານພຽງຢ່າງດຽວ ບໍ່ສາມາດຢືນຢັນໄດ້ວ່າເປັນສາເຫດຂອງມະເຮັງໃນຜູ້ປ່ວຍລາຍນີ້.

ທີ່ມາ: mustsharenews

ຂ່າວພາຍໃນ

ຮັບ ມະຫາສານ ລາຍວັນ ທາງອີເມວ ຟຣີ

ໜັງສືພິມສະບັບໃໝ່ ສົ່ງເຖິງອີເມວທ່ານ ທຸກເຊົ້າ ກ່ອນເຂົ້າວຽກ. ສະແກນ QR ຫຼື ເຂົ້າ mahaxan.com/newspaper

ໂຄສະນາ


ລົງໂຄສະນາ ໃນ ມະຫາສານ ລາຍວັນ

ໜັງສືພິມ PDF ປະຈຳວັນ · ຈອງເປັນລາຍວັນ, ລາຍອາທິດ ຫຼື ລາຍເດືອນ · ທີມງານອອກແບບໃຫ້ຟຣີ

WhatsApp 020 5888 6182

ຂ່າວພາຍໃນ · 14:10 ໂມງ · ອ່ານ 11 ຄັ້ງ

ສອງນາຍົກລັດຖະມົນຕີ ລາວ-ໄທ ພົບປະຫາລື ຊຸກຍູ້ການຂະຫຍາຍມູນຄ່າການຄ້າ ສູ່ 12 ຕື້ໂດລາ ພາຍໃນປີ 2027 ພ້ອມເລັ່ງພັດທະນາການເຊື່ອມໂຍງດ້ານ ຄົມມະນາຄົມ ແລະ ພະລັງງານ



ໃນວັນທີ 15 ພະຈິກ 2026 ທີ່ສູນປະຊຸມສາກົນຟິລິບປິນ ນະຄອນຫຼວງ ມະນີລາ ປະເທດຟິລິບປິນ, ທ່ານ ສະເຫລີມໄຊ ກົມມະສິດ ນາຍົກລັດຖະມົນຕີ ແຫ່ງ ສປປ ລາວ ໄດ້ພົບປະຫາລືທະວິພາຄີກັບ ທ່ານ ອະນຸທິນ ຊານວີຣະກຸນ ນາຍົກລັດຖະມົນຕີ ແຫ່ງ ລາຊະອານາຈັກໄທ ໃນໂອກາດເຂົ້າຮ່ວມກອງປະຊຸມສຸດຍອດອາຊຽນ ຄັ້ງທີ 49 ແລະ ກອງປະຊຸມສຸດຍອດທີ່ກ່ຽວຂ້ອງ.

ການພົບປະຫາລືຄັ້ງນີ້ ມີຈຸດປະສົງເພື່ອສືບຕໍ່ເສີມສ້າງສາຍພົວພັນມິດຕະພາບ ແລະ ຊຸກຍູ້ການຮ່ວມມືຮອບດ້ານ ລະຫວ່າງ ສປປ ລາວ ແລະ ລາຊະອານາຈັກໄທ ໃຫ້ເກີດຜົນເປັນຮູບປະທຳ ໂດຍມີເນື້ອໃນສຳຄັນດັ່ງນີ້:

ດ້ານຄວາມໝັ້ນຄົງ: ທາງການໄທສະເໜີໃຫ້ສອງປະເທດເພີ່ມທະວີການຮ່ວມມືໃນການສະກັດກັ້ນຢາເສບຕິດ ແລະ ສານເຄມີຕັ້ງຕົ້ນ ຜ່ານການເພີ່ມຄວາມເຂັ້ມງວດໃນການລາດຕະເວນຕາມແນວຊາຍແດນ, ການແລກປ່ຽນຂ່າວສານ ແລະ ການເສີມສ້າງຄວາມຮູ້ ຄວາມສາມາດໃຫ້ແກ່ເຈົ້າໜ້າທີ່ລາວ.

ພ້ອມນີ້ ທາງການໄທຍັງໄດ້ຊົມເຊີຍມາດຕະການເຊິງຮຸກຂອງລາວໃນການປາບປາມເຄືອຂ່າຍອາຊະຍາກຳຫຼອກລວງທາງອອນລາຍ ແລະ ຂອບໃຈຕໍ່ການຮ່ວມມືໃນການຊ່ວຍເຫຼືອ ແລະ ສົ່ງຄືນພົນລະເມືອງໄທ. ພ້ອມສະເໜີໃຫ້ໜ່ວຍງານປະສານງານຂອງສອງຝ່າຍເພີ່ມການແລກປ່ຽນຂ່າວສານ ແລະ ຂໍ້ມູນຂ່າວກອງ ເພື່ອຍົກສູງປະສິດທິຜົນໃນການປ້ອງກັນ ແລະ ປາບປາມອາຊະຍາກຳຂ້າມຊາດ. ສ່ວນບັນຫາໝອກຄວັນຂ້າມແດນ ແລະ ການຄຸ້ມຄອງຊັບພະຍາກອນນ້ຳຢ່າງຍືນຍົງ, ຝ່າຍໄທພ້ອມສະໜັບສະໜຸນລາວ ຜ່ານການພັດທະນາບຸກຄະລາກອນ ແລະ ເສີມສ້າງຂີດຄວາມສາມາດໃຫ້ແກ່ໜ່ວຍງານທີ່ກ່ຽວຂ້ອງ.

ດ້ານເສດຖະກິດ ການຄ້າ ແລະ ການລົງທຶນ: ທາງການໄທສະເໜີໃຫ້ທາງ ສປປ ລາວ ສືບຕໍ່ອຳນວຍຄວາມສະດວກດ້ານການຄ້າ ແລະ ການຂົນສົ່ງສິນຄ້າຂ້າມຊາຍແດນ ເພື່ອຊຸກຍູ້ມູນຄ່າການຄ້າສອງຝ່າຍຈາກປະມານ 9,8 ຕື້ໂດລາສະຫະລັດ ໃຫ້ບັນລຸ 12 ຕື້ໂດລາສະຫະລັດ ພາຍໃນ ປີ 2027.

ນອກຈາກນີ້ ທາງການໄທຍັງໄດ້ ຂອບໃຈລັດຖະບານລາວທີ່ໃຫ້ການສະໜັບສະໜຸນການລົງທຶນຂອງພາກເອກະຊົນໄທ ພ້ອມສະເໜີໃຫ້ສືບຕໍ່ປັບປຸງສະພາບແວດລ້ອມທາງທຸລະກິດໃຫ້ເໝາະສົມ ແລະ ເອື້ອອຳນວຍຕໍ່ການລົງທຶນ ເພື່ອສົ່ງເສີມການຄ້າ ແລະ ການລົງທຶນລະຫວ່າງສອງປະເທດໃຫ້ຂະຫຍາຍຕົວຍິ່ງຂຶ້ນ.

ດ້ານຄົມມະນາຄົມ ແລະ ໂລຈິສຕິກ: ທາງການໄທສະເໜີໃຫ້ເລັ່ງປະສານງານ ແລະ ຜັກດັນ 3 ໂຄງການສຳຄັນ ປະກອບມີ:

ການທົບທວນ ແລະ ພິຈາລະນາເສັ້ນທາງເຊື່ອມຕໍ່ຝັ່ງລາວ ສຳລັບໂຄງການ ຂົວລົດໄຟຂ້າມແມ່ນ້ຳຂອງແຫ່ງໃໝ່ ເຊື່ອມຕໍ່ໜອງຄາຍ-ວຽງຈັນ.

ການເລັ່ງສະຫຼຸບຂໍ້ຕົກລົງກ່ຽວກັບ ການແບ່ງຮັບຜິດຊອບຄ່າໃຊ້ຈ່າຍ ໃນການກໍ່ສ້າງຂົວມິດຕະພາບລາວ-ໄທ ແຫ່ງທີ 6 ເສັ້ນທາງອຸບົນຣາຊະທານີ-ສາລະວັນ.

ການຜັກດັນການຈັດຕັ້ງພື້ນທີ່ຄວບຄຸມຮ່ວມ (Common Control Area: CCA) ໂດຍສະເໜີໃຫ້ເລີ່ມພິຈາລະນາຢູ່ຂົວມິດຕະພາບລາວ-ໄທ ແຫ່ງທີ 3 ເສັ້ນທາງນະຄອນພະນົມ-ຄຳມ່ວນ ຫຼື ແຫ່ງທີ 4 ເສັ້ນທາງຊຽງຂອງ-ຫ້ວຍຊາຍ ໂດຍຝ່າຍໄທຢືນຢັນຄວາມພ້ອມໃນການຮ່ວມມື.

ໂຄງການເຫຼົ່ານີ້ຄາດວ່າຈະຊ່ວຍອຳນວຍຄວາມສະດວກໃນການເດີນທາງ ແລະ ການຂົນສົ່ງສິນຄ້າຂ້າມຊາຍແດນ, ຫຼຸດຜ່ອນຕົ້ນທຶນດ້ານໂລຈິສຕິກ ພ້ອມທັງເສີມສ້າງທ່າແຮງຂອງ ສປປ ລາວ ໃນການຫັນປ່ຽນຈາກປະເທດທີ່ບໍ່ມີທາງອອກສູ່ທະເລ ໃຫ້ເປັນປະເທດທີ່ເຊື່ອມໂຍງກັບພາກພື້ນ ແລະ ສາກົນ.

ໂຄງການດັ່ງກ່າວ ຈະປະກອບສ່ວນອຳນວຍຄວາມສະດວກໃນການເດີນທາງ ແລະ ການຂົນສົ່ງສິນຄ້າຂ້າມຊາຍແດນ, ຫຼຸດຜ່ອນຕົ້ນທຶນດ້ານໂລຈິສຕິກ ກໍຄືສົ່ງເສີມທ່າແຮງຂອງ ສປປ ລາວ ໃນການຫັນປ່ຽນຈາກປະເທດທີ່ບໍ່ມີທາງອອກສູ່ທະເລ ໃຫ້ກາຍເປັນປະເທດທີ່ເຊື່ອມໂຍງກັບພາກພື້ນ ແລະ ສາກົນ.

ສຳລັບການຮ່ວມມືດ້ານພະລັງງານ, ສອງຝ່າຍໄດ້ຕີລາຄາສູງຕໍ່ຜົນຄືບໜ້າຂອງໂຄງການເຊື່ອມໂຍງການຊື້-ຂາຍໄຟຟ້າ ລາວ-ໄທ-ມາເລເຊຍ-ສິງກະໂປ (LTMS-PIP) ເຊິ່ງເປັນກົນໄກສຳຄັນໃນການສົ່ງເສີມການພັດທະນາເຄືອຂ່າຍໄຟຟ້າອາຊຽນ (ASEAN Power Grid) ແລະ ປະກອບສ່ວນເສີມສ້າງຄວາມໝັ້ນຄົງດ້ານພະລັງງານໃນພາກພື້ນ. ພ້ອມນີ້, ຍັງໄດ້ສະເໜີໃຫ້ຈັດຕັ້ງຄະນະເຮັດວຽກຮ່ວມດ້ານພະລັງງານ ລາວ-ໄທ ເພື່ອເປັນກົນໄກໃນການເພີ່ມທະວີການປະສານງານ, ແລກປ່ຽນຂໍ້ມູນ ແລະ ຊຸກຍູ້ການຮ່ວມມືດ້ານພະລັງງານໃຫ້ມີປະສິດທິຜົນຍິ່ງຂຶ້ນ ເພື່ອຮັບປະກັນຄວາມໝັ້ນຄົງດ້ານພະລັງງານຂອງສອງປະເທດ ທ່າມກາງສະພາບຕະຫຼາດພະລັງງານໂລກທີ່ມີຄວາມຜັນຜວນ.

ຕໍ່ໜ້າ 4

ສອງນາຍົກລັດຖະມົນຕີ ລາວ-ໄທ ພົບປະຫາລື ຊຸກຍູ້ການຂະຫຍ... (ຕໍ່ຈາກໜ້າ 3)

ການພົບປະຫາລືຄັ້ງນີ້ ເປັນການສືບຕໍ່ສົ່ງເສີມ ແລະ ເສີມສ້າງສາຍພົວພັນມິດຕະພາບ, ຄວາມຮ່ວມມືອັນດີງາມ ລະຫວ່າງ ສປປ ລາວ ແລະ ລາຊະອານາຈັກໄທ ໃຫ້ນັບມື້ຮັດແໜ້ນມິດຕະພາບສາຍພິລພັນ ແລະ ໝັ້ນຄົງຍິ່ງຂຶ້ນ. ພ້ອມທັ້ງເປັນການຊຸກຍູ້ການຮ່ວມມືໃນດ້ານຕ່າງໆ ໃຫ້ເກີດຜົນເປັນຮູບປະທຳ, ປະກອບສ່ວນສ້າງສະພາບແວດລ້ອມອັນສັນຕິສຸກ, ມີສະຖຽນລະພາບ.

ດ້ານພະລັງງານ: ສອງຝ່າຍໄດ້ຊົມເຊີຍຜົນຄືບໜ້າຂອງໂຄງການເຊື່ອມໂຍງການຊື້-ຂາຍໄຟຟ້າ ລາວ-ໄທ-ມາເລເຊຍ-ສິງກະໂປ (LTMS-PIP) ເຊິ່ງເປັນກົນໄກສຳຄັນໃນການສົ່ງເສີມການພັດທະນາເຄືອຂ່າຍໄຟຟ້າອາຊຽນ (ASEAN Power Grid) ແລະ ຊ່ວຍເສີມສ້າງຄວາມໝັ້ນຄົງດ້ານພະລັງງານໃນພາກພື້ນ.

ພ້ອມນີ້ ຍັງມີຂໍ້ສະເໜີໃຫ້ຈັດຕັ້ງຄະນະເຮັດວຽກຮ່ວມດ້ານພະລັງງານລາວ-ໄທ ເພື່ອເພີ່ມທະວີການປະສານງານ, ແລກປ່ຽນຂໍ້ມູນ ແລະ ຊຸກຍູ້ການຮ່ວມມືດ້ານພະລັງງານໃຫ້ມີປະສິດທິຜົນຍິ່ງຂຶ້ນ ທ່າມກາງສະພາບຕະຫຼາດພະລັງງານໂລກທີ່ມີຄວາມຜັນຜວນ.

ການພົບປະຫາລືຄັ້ງນີ້ ເປັນອີກກ້າວສຳຄັນໃນການເສີມສ້າງສາຍພົວພັນມິດຕະພາບ ແລະ ຄວາມຮ່ວມມືອັນດີງາມ ລະຫວ່າງ ສປປ ລາວ ແລະ ລາຊະອານາຈັກໄທ ໃຫ້ນັບມື້ແໜ້ນແຟ້ນຍິ່ງຂຶ້ນ ພ້ອມທັ້ງຊຸກຍູ້ການຮ່ວມມືໃນດ້ານຕ່າງໆໃຫ້ເກີດຜົນເປັນຮູບປະທຳ ເພື່ອສ້າງສະພາບແວດລ້ອມອັນສັນຕິສຸກ, ມີສະຖຽນລະພາບ, ສົ່ງເສີມການເຕີບໂຕທາງເສດຖະກິດ ແລະ ການພັດທະນາຢ່າງຍືນຍົງ ອັນຈະນຳມາເຊິ່ງຜົນປະໂຫຍດອັນແທ້ຈິງແກ່ປະຊາຊົນຂອງສອງປະເທດ.

ຂ່າວ: ສຳນັກຂ່າວ ຕ່າງປະເທດ (Thairath)

ຂ່າວພາຍໃນ · 09:58 ໂມງ · ອ່ານ 11 ຄັ້ງ

ເລຂາທິການໃຫຍ່ ປະທານປະເທດແຫ່ງ ສປປ ລາວ ພົບປະກັບ ປະທານພັກປະຊາຊົນກຳປູເຈຍ ປະທານສະພາສູງ ແຫ່ງ ລາຊະອານາຈັກກຳປູເຈຍ



ໃນຕອນບ່າຍຂອງວັນທີ 14 ພະຈິກ 2026 ທີ່ ສຳນັກງານສະພາສູງກຳປູເຈຍ, ພະນະທ່ານ ທອງລຸນ ສີສຸລິດ, ເລຂາທິການໃຫຍ່, ປະທານປະເທດ ແຫ່ງ ສປປ ລາວ ໄດ້ພົບປະກັບ ສົມເດັດ ອັກຄະມະຫາເສນາບໍດີ ເຕໂຈ ຮຸນແຊນ, ປະທານພັກປະຊາຊົນກຳປູເຈຍ, ປະທານສະພາສູງ ແຫ່ງ ລາຊະອານາຈັກກຳປູເຈຍ ໃນໂອກາດເຂົ້າຮ່ວມກອງປະຊຸມສຸດຍອດ ຝຣັ່ງໂກໂຟນີ ຄັ້ງທີ XX.

ໃນໂອກາດນີ້, ສົມເດັດ ເຕໂຈ ຮຸນແຊນ ໄດ້ສະແດງຄວາມຍິນດີ ແລະ ໃຫ້ການຕ້ອນຮັບອັນອົບອຸ່ນ ແລະ ຕີລາຄາສູງຕໍ່ການພົບປະກັບ ພະນະທ່ານ ທອງລຸນ ສີສຸລິດ ໃນໂອກາດນຳພາຄະນະຜູ້ແທນຂັ້ນສູງຂອງ ສປປ ລາວ ເຂົ້າຮ່ວມກອງປະຊຸມສຸດຍອດ ຝຣັ່ງໂກໂຟນີ ຄັ້ງທີ XX ທີ່ນະຄອນຫຼວງ ພະນົມເປັນ, ລາຊະອານາຈັກ ກຳປູເຈຍ ໃນຄັ້ງນີ້, ຊຶ່ງ ພະນະທ່ານ ທອງລຸນ ສີສຸລິດ ກໍໄດ້ສະແດງຄວາມຂອບໃຈ ຕໍ່ການຕ້ອນຮັບອັນອົບອຸ່ນ ແລະ ສະແດງຄວາມປິຕິຍິນດີທີ່ໄດ້ພົບປະກັບ ສົມເດັດ ເຕໂຈ ຮຸນແຊນ ອີກຄັ້ງ, ພ້ອມທັ້ງສະແດງຄວາມຊົມເຊີຍ ລາຊະອານາຈັກ ກຳປູເຈຍ ທີ່ໄດ້ເປັນເຈົ້າພາບຈັດກອງປະຊຸມ ຝຣັ່ງໂກໂຟນີ ຄັ້ງທີ XX ແລະ ອວຍພອນໃຫ້ກອງປະຊຸມຄັ້ງ ກ່າວປະສົບຜົນສຳເລັດຕາມລະດັບຄາດໝາຍ. ພ້ອມນີ້, ພະນະທ່ານ ທອງລຸນ ສີສຸລິດ ຍັງໄດ້ສະແດງຄວາມຊົມເຊີຍ ຕໍ່ບັນດາຜົນສຳເລັດອັນໃຫຍ່ຫຼວງ ແລະ ຮອບດ້ານ ທີ່ປະຊາຊົນກຳປູເຈຍ ຍາດມາໄດ້ ໃນການປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ ຕະຫຼອດໄລຍະຜ່ານມາ ພາຍໃຕ້ການຊີ້ນຳ-ນຳພາອັນຖືກຕ້ອງ ແລະ ສະຫຼາດສ່ອງໃສຂອງພັກປະຊາຊົນກຳປູເຈຍ ອັນມີ ສົມເດັດ ເຕໂຈ ຮຸນແຊນ ເປັນປະທານ.

ໃນການພົບປະຄັ້ງນີ້, ສອງຝ່າຍ ໄດ້ຕີລາຄາສູງຕໍ່ສາຍພົວພັນມິດຕະພາບອັນເປັນມູນເຊື້ອທີ່ດີງາມ ແລະ ການຮ່ວມມືໃນຖານະ ຄູ່ຮ່ວມມືຍຸດທະສາດ ຮອບດ້ານ ໝັ້ນຄົງຍາວນານ ລະຫວ່າງ ສອງພັກ, ສອງລັດ ແລະ ປະຊາຊົນສອງຊາດ ລາວ-ກຳປູເຈຍ ທີ່ສະແດງອອກຜ່ານການແລກປ່ຽນການຢ້ຽມຢາມ, ໄປມາຫາສູ່ເຊິ່ງກັນ ແລະ ກັນຢ່າງເປັນປົກກະຕິ ຂອງຄະນະຜູ້ແທນຂັ້ນຕ່າງໆ, ທັ້ງຍັງໄດ້ຕີລາຄາສູງຕໍ່ການພົວພັນຮ່ວມມືສອງຝ່າຍໃນຂົງເຂດຕ່າງໆ ທີ່ໄດ້ນຳເອົາຜົນປະໂຫຍດຕົວຈິງມາສູ່ປະຊາຊົນທັ້ງສອງຊາດ. ພິເສດ, ປີ 2026 ແມ່ນປີຄົບຮອບ 70 ປີ (15/6/1956-15/6/2026) ແຫ່ງ ການສ້າງຕັ້ງສາຍພົວພັນການທູດ ລະຫວ່າງ ສປປ ລາວ ແລະ ລາຊະອານາຈັກກຳປູເຈຍ ຊຶ່ງສອງຝ່າຍໄດ້ຮ່ວມກັນຈັດບັນດາກິດຈະກຳຕ່າງໆເພື່ອສະເຫຼີມສະຫຼອງວັນສຳຄັນດັ່ງກ່າວ.

ສອງຝ່າຍ ໄດ້ຊົມເຊີຍຄວາມຄືບໜ້າ ຂອງ ລັດຖະບານສອງປະເທດ ທີ່ໄດ້ມີການຈັດຕັ້ງຜັນຂະຫຍາຍ ບັນດາການຕົກລົງ ແລະ ຜົນຂອງການພົບປະ ຂອງການນຳຂັ້ນສູງຂອງສອງປະເທດ, ໂດຍສະເພາະແມ່ນ ຜົນການພົບປະສຸດຍອດ ຄັ້ງທີ 16 ລະຫວ່າງ ພັກປະຊາຊົນປະຕິວັດລາວ ແລະ ພັກປະຊາຊົນກຳປູເຈຍ. ສອງຝ່າຍ ຍັງໄດ້ເຫັນດີເປັນເອກະພາບ ໃນການສືບຕໍ່ປະສານສົມທົບກັນຢ່າງແໜ້ນແຟ້ນ ເພື່ອເພີ່ມທະວີຄວາມສາມັກຄີ, ຊຸກຍູ້ການເສີມຂະຫຍາຍສາຍພົວພັນມິດຕະພາບອັນເປັນມູນເຊື້ອທີ່ດີງາມ ແລະ ຮັດແໜ້ນການການເປັນຄູ່ຮ່ວມມືຍຸດທະສາດ ຮອບດ້ານ ໝັ້ນຄົງຍາວນານ ລະຫວ່າງ ສອງພັກ, ສອງລັດ ແລະ ປະຊາຊົນ ສອງຊາດ ລາວ-ກຳປູເຈຍ ໃຫ້ແຕກດອກອອກຜົນຍິ່ງໆຂຶ້ນ ແລະ ນຳເອົາຜົນປະໂຫຍດຕົວຈິງ ມາສູ່ປະຊາຊົນ ສອງຊາດ ລາວ-ກຳປູເຈຍ ໃຫ້ນັບມື້ນັບຫຼາຍຂຶ້ນ. ການພົບປະຄັ້ງນີ້ ໄດ້ດຳເນີນໄປດ້ວຍບັນຍາກາດແຫ່ງມິຕິຈິດມິດຕະພາບອັນອົບອຸ່ນ.

ຂ່າວ: ກະຊວງການຕ່າງປະເທດ ແຫ່ງ ສປປ ລາວ

ຂ່າວພາຍໃນ · 09:48 ໂມງ · ອ່ານ 11 ຄັ້ງ

ທ່ານ ສະເຫຼີມໄຊ ກົມມະສິດ ນາຍົກລັດຖະມົນຕີ ເຂົ້າຮ່ວມກອງປະຊຸມສຸດຍອດອາຊຽນ ຄັ້ງທີ 49 ແລະ ກອງປະຊຸມສຸດຍອດທີ່ກ່ຽວຂ້ອງ ທີ່ ມະນີລາ ປະເທດຟີລິບປິນ.



ໃນວັນທີ 15 ພະຈິກ 2026 ທີ່ ມະນີລາ, ສາທາລະນະລັດ ຟີລິບປິນ, ທ່ານ ສະເຫຼີມໄຊ ກົມມະສິດ, ນາຍົກລັດຖະມົນຕີ ແຫ່ງ ສປປ ລາວ ໄດ້ນຳພາຄະນະຜູ້ແທນລາວ ເຂົ້າຮ່ວມກອງປະຊຸມສຸດຍອດອາຊຽນ ຄັ້ງທີ 49 ແລະ ກອງປະຊຸມສຸດຍອດທີ່ກ່ຽວຂ້ອງ, ເຊິ່ງໄດ້ມີພິທີເປີດກອງປະຊຸມຢ່າງເປັນທາງການ ໃນຕອນເຊົ້າຂອງວັນທີ 15 ພະຈິກ 2026, ໂດຍການເປັນປະທານຂອງ ທ່ານ ເຟີດິນານ ມາຄອດ ຈູເນຍ, ປະທານາທິບໍດີ ແຫ່ງ ສາທາລະນະລັດ ຟີລິບປິນ ໃນນາມ ປະທານອາຊຽນ 2026 ໂດຍການເຂົ້າຮ່ວມຂອງຜູ້ນຳອາຊຽນ, ຕາງໜ້າຄະນະຜູ້ແທນ ແລະ ເລຂາທິການໃຫຍ່ອາຊຽນ.

ພາຍຫຼັງສຳເລັດການເຂົ້າຮ່ວມພິທີເປີດ, ທ່ານ ນາຍົກລັດຖະມົນຕີ ສະເຫຼີມໄຊ ກົມມະສິດ ໄດ້ສືບຕໍ່ນຳພາຄະນະຜູ້ແທນຂອງ ສປປ ລາວ ເຂົ້າຮ່ວມກອງປະຊຸມສຸດຍອດອາຊຽນ ຄັ້ງທີ 49 ແບບຄົບຄະນະ ແລະ ແບບວົງແຄບ, ກອງປະຊຸມພິບປະລະຫວ່າງຜູ້ນຳອາຊຽນ ກັບ ບັນດາຜູ້ຕາງໜ້າຈາກສະມັດຊາລັດຖະສະພາລະຫວ່າງຊາດອາຊຽນ, ກອງປະຊຸມພິບປະ ລະຫວ່າງ ຜູ້ນຳອາຊຽນ ກັບ ບັນດາຜູ້ຕາງໜ້າຈາກສະພາທີ່ປຶກສາທຸລະກິດອາຊຽນ ແລະ ກອງປະຊຸມພິບປະ ລະຫວ່າງ ຜູ້ນຳອາຊຽນ ແລະ ບັນດາຜູ້ຕາງໜ້າຊາວໜຸ່ມອາຊຽນ.

ໃນກອງປະຊຸມສຸດຍອດອາຊຽນ ຄັ້ງທີ 49 ແບບຄົບຄະນະ, ບັນດາຜູ້ນຳອາຊຽນ ໄດ້ຮັບຊາບຄວາມຄືບໜ້າໃນການຈັດຕັ້ງປະຕິບັດບັນດາບຸລິມະສິດສຳລັບການເປັນປະທານອາຊຽນຂອງ ຟີລິບປິນ, ລວມທັງແລກປ່ຽນຄຳຄິດຄຳເຫັນ ກ່ຽວກັບ ຄວາມໝັ້ນຄົງຂອງພາກພື້ນ ໂດຍສະເພາະການຮັບປະກັນຄວາມໝັ້ນຄົງດ້ານພະລັງງານ ແລະ ສະບຽງອາຫານ ຂອງພາກພື້ນ ແລະ ໄດ້ແລກປ່ຽນຄຳຄິດເຫັນ ກ່ຽວກັບການຮັດແໜ້ນການພົວພັນກັບຄູ່ຮ່ວມມືພາຍນອກ ແລະ ທິດທາງການຮ່ວມມືໃນຕໍ່ໜ້າ ເພື່ອຮັບມືກັບສິ່ງທ້າທາຍຕ່າງໆ ຄຽງຄູ່ກັບການເສີມສ້າງບົດບາດແກນກາງຂອງອາຊຽນ ແລະ ການຮັກສາສົມດຸນໃນການພົວພັນກັບຄູ່ຮ່ວມມືພາຍນອກ. ກອງປະຊຸມໄດ້ຍົກບັນຫາສິ່ງທ້າທາຍທີ່ບໍ່ແມ່ນການທະຫານເປັນຕົ້ນ ການກໍ່ການຮ້າຍ, ການສໍ້ໂກງທາງອິນເຕີເນັດ, ການຄ້າມະນຸດ ແລະ ຢາເສບຕິດ, ໄພພິບັດທາງທຳມະຊາດ ແລະ ໝອກຄວັນຂ້າມແດນ ທີ່ສົ່ງຜົນກະທົບ ແລະ ຮຽກຮ້ອງໃຫ້ມີການພົວພັນປະສານງານພາຍໃນອາຊຽນ ເພື່ອແກ້ໄຂບັນຫາຮ່ວມກັນ. ກອງປະຊຸມ ໄດ້ເຫັນດີຕໍ່ການສະເໜີເປັນປະທານອາຊຽນຂອງ ຕີມໍ-ເລັດ ສະເຕ ໃນປີ 2029.

ສຳລັບກອງປະຊຸມສຸດຍອດອາຊຽນ ຄັ້ງທີ 49 ແບບວົງແຄບ, ບັນດາຜູ້ນຳອາຊຽນ ໄດ້ທົບທວນຄືນຄວາມຄືບໜ້າຂອງການຈັດຕັ້ງປະຕິບັດ 5 ຂໍ້ຕົກລົງຂອງຜູ້ນຳອາຊຽນ ກ່ຽວກັບ ມຽນມາ, ແລກປ່ຽນຄຳຄິດຄຳເຫັນກ່ຽວກັບ ບັນຫາພາກພື້ນ ແລະ ສາກົນ ທີ່ພົ້ນເດັ່ນ ເປັນຕົ້ນແມ່ນບັນຫາຄວາມໝັ້ນຄົງດ້ານພະລັງງານ ແລະ ສະບຽງອາຫານ. ຜູ້ນຳອາຊຽນ ໄດ້ເນັ້ນຄວາມສຳຄັນການເພີ່ມທະວີການປະສານງານ ແລະ ການພັດທະນາເຄືອຂ່າຍພະລັງງານອາຊຽນ ໃຫ້ປະກົດຜົນເປັນຈິງ ເພື່ອຮັບປະກັນຄວາມສ່ຽງທີ່ອາດເກີດຂຶ້ນໃນຕໍ່ໜ້າ, ຊຸກຍູ້ໃຫ້ເພີ່ມທະວີການຮ່ວມມືຂອງບັນດາຂະ ແໜງການທີ່ກ່ຽວຂ້ອງຂອງອາຊຽນ ໂດຍສະເພາະຂະແໜງການພະລັງງານ, ການຄ້າ ແລະ ຂະແໜງການອື່ນໆ ເພື່ອກຽມຄວາມພ້ອມໃນການຮັບມືກັບວິກິດການດ້ານພະລັງງານໃນອະນາຄົດ.

ໃນຕອນບ່າຍຂອງວັນດຽວກັນ, ທ່ານນາຍົກລັດຖະມົນຕີ ໄດ້ສືບຕໍ່ເຂົ້າຮ່ວມກອງປະຊຸມພິບປະລະຫວ່າງຜູ້ນຳອາຊຽນ ກັບ ບັນດາຜູ້ຕາງໜ້າຈາກສະມັດຊາລັດຖະສະພາ ລະຫວ່າງ ຊາດອາຊຽນ, ທ່ານນາຍົກລັດຖະມົນຕີ ໄດ້ສະແດງຄວາມຊົມເຊີຍຕໍ່ການປະກອບສ່ວນສຳຄັນຂອງ ສະມັດຊາລັດຖະສະພາ ລະຫວ່າງຊາດອາຊຽນ ຜ່ານການເຮັດໜ້າທີ່ການທູດດ້ານລັດຖະສະພາຢ່າງຕັ້ງໜ້າ ໃນຂະບວນການການສ້າງປະຊາຄົມອາຊຽນ ໃຫ້ນັບມື້ນັບເຂັ້ມແຂງ ແລະ ເພື່ອຄວາມເປັນຢູ່ທີ່ດີຂອງປະຊາຊົນອາຊຽນ.

ໃນກອງປະຊຸມພິບປະລະຫວ່າງ ຜູ້ນຳອາຊຽນ ແລະ ບັນດາຜູ້ຕາງໜ້າສະພາທີ່ປຶກສາທຸລະກິດອາຊຽນ, ທ່ານນາຍົກລັດຖະມົນຕີ ໄດ້ຕີລາຄາສູງຕໍ່ການປະກອບສ່ວນອັນສຳຄັນຂອງສະພາທຸລະກິດອາຊຽນໃນການກຳນົດແຜນບຸລິມະສິດຂອງພາກທຸລະກິດ ໃນປີ 2026. ພ້ອມກັນນີ້, ທ່ານຍັງໄດ້ຢໍ້າເຖິງຄວາມສຳຄັນຂອງການຍົກລະດັບສັນຍາການຄ້າດ້ານສິນຄ້າອາຊຽນ (ATIGA), ການດຳເນີນງານຕາມສັນຍາຂອບເສດຖະກິດດິຈິຕອນອາຊຽນ (DEFA) ໃຫ້ເກີດໝາກຜົນ ແລະ ການນຳໃຊ້ ສັນຍາການຮ່ວມມືເສດຖະກິດແບບຮອບດ້ານລະດັບພາກພື້ນ (RCEP) ກັບ ສັນຍາເຂດການຄ້າເສລີຂອງອາຊຽນໃຫ້ເກີດປະໂຫຍດສູງສຸດ.

ໃນກອງປະຊຸມພິບປະລະຫວ່າງ ຜູ້ນຳອາຊຽນ ແລະ ບັນດາຜູ້ຕາງໜ້າຊາວໜຸ່ມອາຊຽນ, ຜູ້ນຳອາຊຽນ ໄດ້ຮັບຊາບ ແລະ ໃຫ້ທິດຊີ້ນຳຕໍ່ຂໍ້ສະເໜີ ຂອງ ຊາວໜຸ່ມ “ຊາວໜຸ່ມອາຊຽນກ້າວສູ່ອະນາຄົດທີ່ເຂັ້ມແຂງ, ທັນເປັນດິຈິຕອນ

ຕໍ່ໜ້າ 6

ท่าน สะเห฼ิมไซ กิมมะสิด นายึกลัดถะมึนตี เอ๋าร่อมกอวปะ... (ต่อจากหน้า 5)

ແລະ ກອມລອມ”. ໃນໂອກາດດັ່ງກ່າວ, ທ່ານ ນາຍົກລັດຖະມົນຕີ ສະເຫຼີມໄຊ ກົມມະສິດ ໄດ້ສະແດງຄວາມຊົມເຊີຍ ຕໍ່ ບົດບາດ ແລະ ການປະກອບສ່ວນອັນ ສຳຄັນຂອງຊາວໜຸ່ມອາຊຽນ ໃນການສ້າງ ອະນາຄົດຂອງອາຊຽນໃຫ້ມີຄວາມເຂັ້ມ ແຂງ ແລະ ຍືນຍົງ ໂດຍຊຸກຍູ້ໃຫ້ ຊາວໜຸ່ມອາຊຽນ ໃຫ້ສືບຕໍ່ຜັນຂະຫຍາຍ ການຮ່ວມມືໃນດ້ານຕ່າງໆ ຢ່າງມີຫົວຄິດ ປະດິດສ້າງ ແລະ ມີຄວາມຮັບຜິດຊອບສູງ. ພ້ອມນີ້, ທ່ານ ນາຍົກລັດຖະມົນຕີ ຍັງໄດ້ ສະເໜີໃຫ້ອາຊຽນ ສ້າງໂອກາດໃຫ້ ຊາວໜຸ່ມອາຊຽນ ສາມາດເຂົ້າເຖິງເຕັກໂນ ໂລຊີທີ່ທັນສະໄໝ ແລະ ນຳໃຊ້ດິຈິຕອນ ໃຫ້ເກີດປະສິດທິຜົນສູງສຸດ.

ຂ່າວ: ກະຊວງການຕ່າງປະເທດ ແຫ່ງ ສປປ ລາວ


ໂຄສະນາ

ບໍ່ມີເວລາອ່ານ? ກົດຟັງໄດ້ເລີຍ

ທຸກຂ່າວໃນ mahaxan.com ມີສຽງອ່ານພາສາລາວ — ຟັງຂະນະຂັບລົດ ຫຼື ເຮັດວຽກ. ເປີດຂ່າວໃດກໍໄດ້ ແລ້ວກົດ ▶ ຟັງ.

ข่าวพายใน · 13:06 โมง · อ่าน 8 ถั้ง

ผู้นำ 3 พัก ลาว-ทวงดนาม-กำปูเจย ร่อมปึกสาหาลิ เพื่อเสิมขะหยายกามพ็อพันร่อมมื



ในตอนเຊົ້ານັ້ນທີ 16 ພະຈິກນີ້, ສະຫາຍ ທອງລຸນ ສີສຸລິດ ເລຂາທິການໃຫຍ່ຄະນະບໍລິຫານງານສູນກາງພັກ ປະຊາຊົນ ປະຕິວັດລາວ ປະທານປະເທດ ແຫ່ງ ສປປ ລາວ; ສະຫາຍ ໂຕ ເລີ່ມ ເລຂາທິການໃຫຍ່ຄະນະບໍລິຫານງານ ສູນກາງພັກກອມມູນິດຫວຽດນາມ ປະທານປະເທດ ແຫ່ງ ສສ ຫວຽດນາມ ແລະ ສົມເດັດ ອັກຄະມະຫາເສນາບໍດີ ເຕໂຈ ຮຸນແຊນ ປະທານພັກປະຊາຊົນກຳປູເຈຍ ປະທານ ສະພາສູງແຫ່ງຣາຊະອານາຈັກກຳປູເຈຍ ໄດ້ຮັບປະທານ ອາຫານເຊົ້າ ແລະ ພົບປະສາມຝ່າຍ ລາວ-ຫວຽດນາມ-ກຳປູເຈຍ ໂດຍການເປັນເຈົ້າພາບຂອງ ສົມເດັດ ອັກຄະ ມະຫາເສນາບໍດີ ເຕໂຈ ຮຸນແຊນ ປະທານພັກປະຊາຊົນກຳປູ ເຈຍ ປະທານສະພາສູງແຫ່ງຣາຊະອານາຈັກກຳປູເຈຍ, ໃນ ໂອກາດເຂົ້າຮ່ວມກອງປະຊຸມສຸດຍອດຝ່ຽງໂກໂຟນີ້ຄັ້ງທີ XX ທີ່ ນະຄອນຫຼວງພະນົມເປັນ ຣາຊະອານາຈັກ ກຳປູເຈຍ.

ໃນການພົບປະດັ່ງກ່າວ, ຜູ້ນຳສາມ ພັກ ຕ່າງກໍໄດ້ສະແດງຄວາມປິຕິຍິນດີທີ່ໄດ້ ພົບປະກັນອີກຄັ້ງ ພ້ອມທັງໄດ້ປຶກສາຫາລື ແລະ ຕີລາຄາໝາກຜົນຂອງການພົວພັນ ຮ່ວມມືລະຫວ່າງສາມພັກ, ສາມປະເທດ ໃນໄລຍະຜ່ານມາ ຊຶ່ງສາມຝ່າຍໄດ້ມີການ ປະສານສົມທົບ ແລະ ຮ່ວມມືຢ່າງແໜ້ນ ແຟ້ນ ແລະ ຮັກສາໄດ້ການໄປມາຫາສູ່ກັນ, ການແລກປ່ຽນຂໍ້ມູນຂ່າວສານ ແລະ ການ ພົບປະກັນຂອງສາມປະເທດຢ່າງປົກກະຕິ. ພ້ອມດຽວກັນນີ້, ຜູ້ນຳຂອງສາມພັກ ໄດ້ ແຈ້ງໃຫ້ກັນຊາບໂດຍຫຍໍ້ ກ່ຽວກັບ ສະພາບການຂອງແຕ່ລະພັກ, ແຕ່ລະ ປະເທດ ລວມທັງໄດ້ແລກປ່ຽນຄຳຄິດເຫັນ ກ່ຽວກັບສະພາບການພື້ນເດັ່ນຂອງພາກ ພື້ນ ແລະ ສາກົນ ທີ່ສາມຝ່າຍມີຄວາມ ສົນໃຈຮ່ວມກັນ.

ໃນໂອກາດດຽວກັນນີ້, ຜູ້ນຳຂອງ ສາມພັກ ໄດ້ສະແດງຄວາມຊົມເຊີຍຕໍ່ ບັນດາຜົນສຳເລັດອັນສຳຄັນ, ຮອບດ້ານທີ່ ສາມພັກ, ສາມປະເທດ ສາມາດຍາດມາ ໄດ້, ສະແດງຄວາມຮູ້ບຸນຄຸນ ແລະ ຂອບໃຈຕໍ່ການສະໜັບສະໜຸນ, ຊ່ວຍເຫຼືອຊຶ່ງກັນ ແລະ ກັນທີ່ສາມຝ່າຍໄດ້ ມີໃຫ້ແກ່ກັນໃນພາລະກິດຕໍ່ສູ້ປົດປ່ອຍ ຊາດໃນເມື່ອກ່ອນກໍຄືໃນພາລະກິດແຫ່ງ ການປົກປັກຮັກສາ ແລະ ສ້າງສາພັດທະນາ ປະເທດຊາດໃນປັດຈຸບັນ.

ຜູ້ນຳຂອງສາມພັກຍັງໄດ້ຕີລາຄາສູງ ທີ່ສາມຝ່າຍສືບຕໍ່ຮັກສາໄດ້ກົນໄກການ ພົບປະລະຫວ່າງ ກົມ ການເມືອງ, ລັດຖະບານ, ກະຊວງ-ອົງການ ແລະ ທ້ອງຖິ່ນຂອງສາມປະເທດ ຊຶ່ງໄດ້ກາຍເປັນ

ต่อหน้า 7

ຜູ້ນຳ 3 ພັກ ລາວ-ຫວຽດນາມ-ກຳປູເຈຍ ຮ່ວມປຶກສາຫາລື ເພື່ອເ... (ຕໍ່ຈາກໜ້າ 6)

ປະເພນີ ແລະ ສ້າງໂອກາດອັນດີແກ່ການປຶກສາຫາລື ກ່ຽວກັບການຮ່ວມມືຂອງສາມປະເທດ. ພ້ອມດຽວກັນນີ້, ຜູ້ນຳຂອງສາມພັກໄດ້ຢືນຢັນຄືນຢ່າງໜັກແໜ້ນວ່າ ທັງສາມພັກ ແລະ ສາມປະເທດຈະສືບຕໍ່ປົກປັກຮັກສາ ແລະ ເສີມຂະຫຍາຍມໍລະດົກອັນລ້ຳຄ່າ ແຫ່ງສາຍພົວພັນມິດຕະພາບອັນເປັນມູນເຊື້ອ, ຄວາມສາມັກຄີ ແລະ ການຮ່ວມມືຮอบດ້ານ ລະຫວ່າງສາມພັກ, ສາມລັດ ແລະ ປະຊາຊົນສາມຊາດລາວ-ຫວຽດນາມ-ກຳປູເຈຍ ໃຫ້ຈະເລີນງອກງາມ ແລະ ແຕກດອກອອກຜົນຍິ່ງໆຂຶ້ນ.

(ຂ່າວ: ກຕຫ)

◆ ຂ່າວພາຍໃນ · 09:27 ໂມງ · ອ່ານ 8 ຄັ້ງ

ລາວ-ກຳປູເຈຍ ສືบຕໍ່ເສີมຂะหยาย ແລะ ธัดแข้มภาพพ้อพันธ์ร่อมมื



ໃນວັนที่ 14 พะจิก 2026 นี้, ท่าน ทองลุน สีสุลิด ปะทานปะเทด แห่ง สปป ลาว ได้พิบปะกับ พะบาด สีมเด้ด พะบ้อมมะนุด โนโธดิม สีหามุนี พะมะหา กะสัด แห่ง ลาชะอานาจักกำปูเจย ใน โอกาดเดิน ทางเข้าร่อมกองปะชุมสุดยอด ฝธั่งโกโฟนี ถั้งที่ XX ยู่ลาชะอานาจักกำปูเจย ตามภานเชื้อเชิน ของ พะ บาดสีมเด้ด พะบ้อมมะนุด โนโธดิม สีหามุนี พะมะหากะสัด แห่ง ลาชะอานาจักกำปูเจย.

ในโอกาดนี้, พะบาดสีมเด้ด พะบ้อมมะนุด โนโธดิม สีหามุนี ได้สะแดงถอามยินดี ແລะ ใช้ต้อนรับย่างอิบอุ่น พ้อมทั้งติลาถาสูงต่ำภานเดินทางมาเข้ำ ร่อมกองปะชุมสุดยอด ฝธั่งโกโฟนี ถั้งที่ XX ในถั้งนี้. ขะนะดียวกัน, ท่าน ทองลุน สีสุลิด กำได้สะแดงถอามปิติยินดีที่ได้พิบปะกับ พะบาด สีมเด้ด พะบ้อมมะนุด โนโธดิม สีหามุนี ແລะ ได้เดินทางมาย้วม ยาม ลาชะอานาจัก กำปูเจย อีกถั้งหนึ่ง พายหลังภานย้วมยามลัดถะกิด ในต้นปี 2026 ที่ผ่านมา.

ในภานพิบปะถั้งนี้, สองฝ่าย ได้ติลาถาสูง ต่ำภานสะเหลิมสะหลองถบธอบ 70 ปี แห่ง ภานส้างถั้งสายพ้อพันภานทูด ແລะ ถบธอบ 7 ปี แห่ง ภานยิกละดับสายพ้อพันขึ้น เป็นถุ่ร่อมมือยุดทะสาดธอบด้าน ແລะ หมั้นถิยาอมาน ละหว่าง สองปะเทด ในปี 2026 นี้. ภานพิบปะสองฝ่าย ละหว่าง ท่าน ทองลุน สีสุลิด ແລะ พะบาดสีมเด้ด พะบ้อมมะนุด โนโธดิม สีหามุนี ได้นำเนินไปด้อยไมตีจิดมิดตะพาบอันอิบอุ่น โดยสองฝ่ายได้แลกป่ายนถอามถิดเห็น เชิ่งกันและกัน ย่างเลิกเชิ่งและจิงใจ ซึ่งจะเป็นพื้นถาน อันหมักแหม้น ให้แก่ภานเสิมขะหยายสายพ้อพันมิด ตะพาบอันเป็นมูนเชื้อ, ถานบ้านใก้เรือนถงๆ, บ้านอ้ายเมืองน้อง,บ้านแก่อเมืองถองที่ดิต่ำกัน, พ้อมทั้งเป็นภานยิกละดับ ແລะ เพิ่มพูนถูนส้างภานเป็นถุ่ร่อมมือยุดทะสาดธอบด้าน ແລะ หมั้นถิยาอมาน ละหว่าง สองปะเทด ใก้จะเลิงงอกงามยิ่งๆขึ้นไป.

ในตอนท้าย, ท่าน ทองลุน สีสุลิด กำได้ตางหน้า ใก้แก่ พัก,ลัด ແລะ ปะชาชินลาอบันดาเผ่า สะแดงถอามขอบใจ มายังพะบาดสีมเด้ด, ลัดถะบาน ແລะ ปะชาชินกำปูเจย ที่ได้ใก้ภานสะหนับสะหนุน ແລะ ช่วยเหลือ แก่ สปป ลาว มาโดยตะหลอด, นับตั้งแต่ไลยะภานต่ำสู้กู้ชาดจินเถิงไลยะแห่งภานปักปักธัก สา ແລะ พัดทะนาปะเทดชาด ในปัดจุบัน. พ้อมนั้น, ท่าน ทองลุน สีสุลิด กำได้เชื้อเชิน พะบาด สีมเด้ด พะบ้อมมะนุด โนโธดิม สีหามุนี พะมะหากะสัด แห่ง ลาชะอานาจักกำปูเจย สะเด้ดไปย้วมยาม สปป ลาว ในเอลาที่เหมาะสม เพื่อสืบต่อปะกอบส่อนเข้ำในภานธัดแหม้นสายพ้อพันมิดตะพาบ อันเป็นมูนเชื้อ ແລะ ภานร่อมมือที่ดี ใก้แหม้นแฟ้นและขะหยายติอย่ิงๆขึ้น.

ลาถาบ้ำมัน, เงิน, ถำ, หวย ແລะ อากาด — สืดทุกมื้
เบิ่งติอเลกล่าสุด ที่ mahaxan.com/today · ໜ้า 20 ในสะบับนี้

โถสะบา
บ่มีเอลาอ่าน? กืดฟังได้เลีย
ทุกข่าวใน mahaxan.com มีสงอ่านพาสาลาว — ฟังขะนะขับลิด หรือ เธัดองก. เปิดข่าวใดกำได้ แล้วกืด ▶ ฟัง.

◆ ເສດຖະກິດ-ສັງຄົມ · 10:16 ໂມງ · ອ່ານ 14 ຄັ້ງ

ຂ່າວດີປະຊາຊົນ! ໄຟຟ້າລາວ ຍົກເວັ້ນອາກອນມູນຄ່າເພີ່ມ 10% ໃຫ້ຜູ້ໃຊ້ໄຟບໍ່ເກີນ 300 kWh ຍາວຈົນຮອດປີ 2029.



ບໍລິສັດ ລັດວິສາຫະກິດໄຟຟ້າລາວ ອອກແຈ້ງການເຖິງຜູ້ຊົມໃຊ້ໄຟຟ້າປະເພດທີ່ຢູ່ອາໄສໃນທົ່ວປະເທດ ກ່ຽວກັບການຈັດຕັ້ງປະຕິບັດນະໂຍບາຍຍົກເວັ້ນອາກອນມູນຄ່າເພີ່ມ (VAT 10%) ສຳລັບຜູ້ທີ່ຊົມໃຊ້ໄຟຟ້າບໍ່ເກີນ 300 kWh ຕໍ່ເດືອນ ເຊິ່ງກວມເອົາ 83% ຂອງຄົວເຮືອນທັງໝົດ ໂດຍມີຜົນບັງຄັບໃຊ້ຍາວຈົນຮອດທ້າຍປີ 2029.

ອີງຕາມແຈ້ງການຂອງ ບໍລິສັດ ລັດວິສາຫະກິດໄຟຟ້າລາວ ເຖິງບັນດາຜູ້ຊົມໃຊ້ໄຟຟ້າພາກທີ່ຢູ່ອາໄສໃນຂອບເຂດທົ່ວປະເທດ ໃຫ້ຊາບວ່າ ຄະນະປະຈຳສະພາແຫ່ງຊາດ ໄດ້ອະນຸມັດການຍົກເວັ້ນອາກອນມູນຄ່າເພີ່ມ (VAT 10%) ເພື່ອຊ່ວຍແບ່ງເບົາພາລະຄ່າຄອງຊີບໃຫ້ແກ່ປະຊາຊົນ ໂດຍມີລາຍລະອຽດສຳຄັນດັ່ງນີ້:

1. ເງື່ອນໄຂ ແລະ ກຸ່ມເປົ້າໝາຍທີ່ໄດ້ຮັບສິດ

ປະເພດຜູ້ຊົມໃຊ້: ສະເພາະຜູ້ຊົມໃຊ້ໄຟຟ້າພາກຄົວເຮືອນ (ທີ່ຢູ່ອາໄສ) ເທົ່ານັ້ນ.

ປະລິມານການຊົມໃຊ້: ຕ້ອງມີການຊົມໃຊ້ພະລັງງານໄຟຟ້າຢູ່ໃນລະຫວ່າງ 0-300 kWh ຕໍ່ເດືອນ.

ຂອບເຂດຜົນກະທົບ: ອີງຕາມສະຖິຕິການຊົມໃຊ້ໄຟຟ້າພາກທີ່ຢູ່ອາໄສ ກຸ່ມທີ່ໃຊ້ໄຟຟ້າ 0-300 kWh ແມ່ນກວມເອົາເຖິງ 83% ຂອງຜູ້ຊົມໃຊ້ໄຟຟ້າພາກຄົວເຮືອນໃນທົ່ວປະເທດ.

2. ໄລຍະເວລາການຍົກເວັ້ນ

ມາດຕະການຍົກເວັ້ນອາກອນມູນຄ່າເພີ່ມ 10% ດັ່ງກ່າວ ໄດ້ເລີ່ມຈັດຕັ້ງປະຕິບັດມາແຕ່ ຮອບໃບບິນເດືອນ ກັນຍາ 2026 ຈົນຮອດ ເດືອນ ທັນວາ 2029.

3. ຂໍ້ຍົກເວັ້ນໃນການຄິດໄລ່ຄ່າບໍລິການ

ສຳລັບການຍົກເວັ້ນ VAT 10% ແມ່ນຈະຄິດໄລ່ສະເພາະຄ່າພະລັງງານໄຟຟ້າທີ່ຊົມໃຊ້ຕົວຈິງເທົ່ານັ້ນ. ສ່ວນ ຄ່າບຳລຸງຮັກສາ ແມ່ນຍັງຈະໄດ້ຄິດໄລ່ອາກອນມູນຄ່າເພີ່ມ (VAT) ຕາມທີ່ກົດໝາຍກຳນົດໄວ້ຕາມປົກກະຕິ.

ຮັບ ມະຫາສານ ລາຍວັນ ທາງອີເມວ ຟຣີ

ໜັງສືພິມສະບັບໃໝ່ ສົ່ງເຖິງອີເມວທ່ານ ທຸກເຊົ້າ ກ່ອນເຂົ້າວຽກ. ສະແກນ QR ຫຼື ເຂົ້າ mahaxan.com/newspaper

ໂຄສະນາ

ລົງໂຄສະນາ ໃນ ມະຫາສານ ລາຍວັນ

ໜັງສືພິມ PDF ປະຈຳວັນ · ຈອງເປັນລາຍວັນ, ລາຍອາທິດ ຫຼື ລາຍເດືອນ · ທີມງານອອກແບບໃຫ້ຟຣີ

WhatsApp 020 5888 6182

◆ ເສດຖະກິດ-ສັງຄົມ · 10:28 ໂມງ · ອ່ານ 12 ຄັ້ງ

ເລີ່ມມື້ນີ້ 16 ພະຈິກ 2026! ທາງຫຼວງເລກ 9 ເປີດເກັບຄ່າຜ່ານທາງສະເພາະລົດໂດຍສານ ແລະ ຂົນສົ່ງສິນຄ້າທີ່ມີນ້ຳໜັກ 12 ໂຕນຂຶ້ນໄປ



ໂຄງການຟື້ນຟູ ແລະ ບຸລະນະຮັກສາເສັ້ນທາງຫລວງແຫ່ງຊາດເລກ 9 ແຕ່ວິງວຽນໄດໂນເສົາ ນະຄອນໄກສອນພົມວິຫານ ຫາຊາຍແດນລາວ-ຫວຽດນາມ ທີ່ເມືອງເຊໂປນ ແຂວງສະຫວັນນະເຂດ, ລວຍຍາວ 233.30 ກມ, ໃນຮູບແບບສັນຍາປະສົມ (OPBRC ແລະ PRTC) ຕາມນະໂຍບາຍຫັນປ່ຽນ ໃໝ່ຂອງລັດຖະບານ, ໂດຍແມ່ນລັດວິສາຫະກິດກໍ່ສ້າງທາງເລກ 8 ເປັນຜູ້ຮັບເໝົາຟື້ນຟູ ແລະ ບຸລະນະຮັກສາທາງຫລວງແຫ່ງຊາດເລກ 9 ໃນໄລຍະ 10 ປີ;

ມາຮອດປະຈຸບັນໂຄງການດັ່ງກ່າວ ມີຄວາມຄືບໜ້າຫລາຍສົມຄວນ ໂດຍສະເພາະແມ່ນໃນວຽກງານປັບປຸງເສັ້ນທາງໃຫ້ໂລ່ງລ່ຽນ ແລະ ກຳລັງເປີດການເກັບເງິນຄ່າຜ່ານທາງແບບໃຊ້ໄມ້ກັ້ນ ໃນໄລຍະທີ່ຍັງບໍ່ທັນມີລະບົບເກັບເງິນແບບທັນສະໄໝ ຊຶ່ງເລີ່ມປະຕິບັດໃນມື້ນີ້, ວັນທີ 16 ພະຈິກ 2026, ໂດຍແມ່ນກົມຂົວທາງ ກະຊວງ ຍທຂ, ພະແນກ ຍທຂ ສົມທົບກັບລັດວິສາຫະກິດກໍ່ສ້າງທາງເລກ 8 ຈັດຕັ້ງປະຕິບັດຕາມອັດຕາທີ່ລັດຖະບານຮັບຮອງເອົາ ຕາມແຈ້ງການຂອງຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ເລກທີ 998/ຫສນຍ, ລົງວັນທີ 23/07/2026, ສະເພາະລົດທີ່ມີນ້ຳໜັກ 12 ໂຕນຂຶ້ນໄປ.

ນີ້ແມ່ນ ປະຕິບັດຕາມຂໍ້ຕົກລົງຂອງ ກະຊວງ ຍທຂ ວ່າດ້ວຍການຮັບຮອງເອົາລາຄາເກັບຄ່າຜ່ານທາງຂອງແຕ່ລະສະຖານີ ຂອງໂຄງການຟື້ນຟູ ແລະ ບຸລະນະຮັກສາເສັ້ນທາງຫລວງແຫ່ງຊາດເລກ 9 ນຳໃຊ້ສະເພາະການຈັດຕັ້ງປະຕິບັດລະບົບໄມ້ກັ້ນ (ເກັບແບບ Manual) ໃນໄລຍະທີ່ຍັງບໍ່ທັນມີລະບົບເກັບເງິນແບບທັນສະໄໝ ແລະ ປະຕິບັດຕາມແຈ້ງການຂອງຄະນະກຳມະການປົກຄອງແຂວງສະຫວັນນະເຂດ ກ່ຽວກັບການເກັບເງິນຄ່າຜ່ານທາງຫລວງແຫ່ງຊາດ ແຕ່ວິງວຽນໄດໂນເສົາ ນະຄອນໄກສອນພົມວິຫານ ຫາຊາຍແດນລາວ-ຫວຽດນາມ ເມືອງເຊໂປນ,

ສຳລັບອັດຕາຄ່າຜ່ານທາງຈະເກັບໃນລາຄາ 107.35 ກີບ/ໂຕນ/ກມ, ວິທີການເກັບເງິນຄ່າຜ່ານທາງ:

ເກັບສະເພາະລົດຂົນສົ່ງໂດຍສານ ແລະ ສິນຄ້າທີ່ມີນ້ຳໜັກລວມ 12 ໂຕນ ຂຶ້ນໄປ ຜ່ານລະບົບທັນສະ ໄໝ; ລະບົບການເກັບເງິນຈະມີ 6 ຊ່ອງທາງ (3ຊ່ອງ ໄປ ແລະ3 ຊ່ອງກັບ), ຊຶ່ງປະກອບດ້ວຍ ຊ່ອງຈ່າຍຄ່າຜ່ານທາງແບບອັດຕະໂນມັດ (ETC) ຜ່ານບັດ, ຊ່ອງຈ່າຍຄ່າທາງດ້ວຍມື, (MTC) ແບບເງິນສົດ ຫຼື ໂອນ ແລະ ຊ່ອງບໍ່ເກັບເງິນສະເພາະລົດທີ່ມີນ້ຳໜັກຕ່ຳກວ່າ 12 ໂຕນ ແລະ ລົດພິເສດ; ຈະມີຊິ້ງຊັ່ງທັນສະໄໝ ຫ່າງຈາກຈຸດ ປິດ-ເປີດໄມ້ກັ້ນ 150 ແມັດ ແລະ ມີກ້ອງອັດສະລິຍະ ຕິດຕາມໃນເສັ້ນທາງທຸກໆ 10 ກິໂລແມັດ/ຈຸດ ແລະ ໃນຈຸດທີ່ເໝາະສົມຕື່ມ ເພື່ອຄົດໄລ່ຄ່າຜ່ານທາງແບບອັດຕະໂນມັດຢູ່ທີ່ສະຖານີເກັບເງິນ, ໂດຍລັດເປັນຜູ້ຄຸ້ມຄອງເກັບເງິນ ແລະການມີສ່ວນຮ່ວມກັບຜູ້ລົງທຶນ; ການຕິດ ຕາມການເກັບຄ່າຜ່ານທາງ ແມ່ນຜ່ານລະບົບທັນສະໄໝທີ່ກະຊວງການເງິນ ແລະ ກະຊວງ ຍທຂ ສາ ມາດຕິດຕາມໄດ້ແບບ Real time ແລ້ວໂອນເຂົ້າບັນຊີສະເພາະທາງເລກ 9 ທີ່ເປີດໄວ້ຢູ່ຄັງເງິນແຫ່ງຊາດ; ລາຍຮັບທັງໝົດຈາກການເກັບຄ່າຜ່ານທາງດັ່ງກ່າວ ຈະຖືກນຳໃຊ້ເຂົ້າໃນວຽກງານການບຳລຸງຮັກສາ, ສ້ອມແປງ ແລະຍົກລະດັບເສັ້ນທາງຫລວງແຫ່ງຊາດ ເລກ 9 ໃຫ້ມີຄວາມສະດວກ, ປອດໄພ ແລະຍືນຍົງ ສາມາດຮອງຮັບນ້ຳໜັກໄດ້ຕາມມາດຕະຖານສາກົນ.

ຕະຫລອດສາຍທາງເລກ 9 ແມ່ນມີສະຖານີເກັບເງິນຄ່າຜ່ານທາງດ້ວຍລະບົບທັນສະໄໝທັງໝົດ 4 ແຫ່ງຄື: ສະຖານີບ້ານນາທາດ ເມືອງອຸທຸມພອນ; ສະຖານີບ້ານບົວຄຳ ເມືອງອາດສະພັງທອງ; ສະຖານີ ບ້ານໜອງກົບ ແລະ ສະຖານີບ້ານສະໝຸນ ເມືອງເຊໂປນ ຊຶ່ງປະຈຸບັນການກໍ່ສ້າງພື້ນຖານໂຄງລ່າງ ແລະ ສິ່ງອຳນວຍຄວາມສະດວກຕ່າງໆພາຍໃນສະຖານີເກັບເງິນທັງ 4 ແຫ່ງ ແມ່ນມີຄວາມຄືບໜ້າຫຼາຍພໍສົມຄວນ ແລະ ມີຄວາມພ້ອມແລ້ວໃນການຈັດຕັ້ງປະຕິບັດການເກັບເງິນຄ່າຜ່ານທາງໃນມື້ນີ້.%


ຂ່າວ:ຜາຕຸ

ທີ່ມາ: ສະຫວັນພັດທະນາ ຂ່າວ

ລາຄານ້ຳມັນ, ເງິນ, ຄຳ, ຫວຍ ແລະ ອາກາດ — ສົດທຸກມື້
ເບິ່ງຕົວເລກລ່າສຸດ ທີ່ mahaxan.com/today · ໜ້າ 20 ໃນສະບັບນີ້

◆ ເຫດການ · 11:38 ໂມງ · ອ່ານ 10 ຄັ້ງ

“ກອາດລ້າງຮຽບ! ປກສ ບຸກມ້າງແກ໊ງສໍ້ໂກງອອນລາຍ 3 ຈຸດ ຢູ່ສີສັດຕະນາກ ຈັບຕົວຄົນໄທ-ລາວ 6 ຄົນ”



ໃນວັນທີ 11 ພະຈິກ 2026 ທີ່ຜ່ານມາ, ເຈົ້າໜ້າທີ່ໜ່ວຍສະເພາະກິດ ກະຊວງປ້ອງກັນຄວາມສະຫງົບ ໄດ້ລົງປະຕິບັດການມ້າງກຸ່ມກໍ່ອາຊະຍາກຳທາງອິນເຕີເນັດ ຈຳນວນ 3 ຈຸດ ຢູ່ເຂດເມືອງສີສັດຕະນາກ ນະຄອນຫຼວງວຽງຈັນ. ຜ່ານການກວດກາ ແລະ ປະຕິບັດການຕົວຈິງ ສາມາດກັກຕົວເປົ້າໝາຍ ແລະ ຍຶດຂອງກາງ ໄດ້ລາຍລະອຽດດັ່ງນີ້:

1. ຈຸດທີ 1 ແລະ ຈຸດທີ 2 (ບ້ານພັນໜັ້ນ)

ຜູ້ຖືກກັກຕົວ: ກັກຕົວເປົ້າໝາຍໄດ້ 1 ຄົນ ເປັນຄົນສັນຊາດໄທ.

ຂອງກາງທີ່ຍຶດໄດ້: ໂທລະສັບມືຖື 8 ເຄື່ອງ, ຄອມພິວເຕີຕັ້ງໂຕະ 10 ເຄື່ອງ, ລົດຈັກໄຟຟ້າ 2 ຄັນ, ຈໍຄອມພິວເຕີ 1 ຈໍ, ແທັບເລັດ 1 ໜ່ວຍ ແລະ ປຸ່ມເປົ້າບັນຈຸແກັດໄນຕຣັດອອກຊາຍ (Nitrous Oxide) ຈຳນວນ 15 ໜ່ວຍ.

2. ຈຸດທີ 3 (ບ້ານວັດສີບ)

ຜູ້ຖືກກັກຕົວ: ກັກຕົວເປົ້າໝາຍໄດ້ 5 ຄົນ (ຍິງ 2 ຄົນ) ປະກອບມີ 2 ສັນຊາດ ຄື: ສັນຊາດໄທ 4 ຄົນ (ຍິງ 2 ຄົນ) ແລະ ສັນຊາດລາວ 1 ຄົນ.

ຂອງກາງທີ່ຍຶດໄດ້: ຄອມພິວເຕີໂນດບຸກ 5 ເຄື່ອງ, ໂທລະສັບມືຖື 3 ເຄື່ອງ ແລະ ແທັບເລັດ 1 ໜ່ວຍ.

ຕໍ່ກັບເຫດການດັ່ງກ່າວ, ປັດຈຸບັນ ເຈົ້າໜ້າທີ່ຕຳຫຼວດກຳລັງນຳຕົວເປົ້າໝາຍ ທັງໝົດໄປສືບສວນ-ສອບສວນຂະຫຍາຍຜົນ ເພື່ອດຳເນີນຄະດີຕາມລະບຽບກົດໝາຍ.

ທີ່ມາ: ຄວາມສະຫງົບ Lao Security News

ທ່ອງທ່ຽວ

◆ ທ່ອງທ່ຽວ · 16:58 ໂມງ · ອ່ານ 3 ຄັ້ງ

ຂ່າວດີຕ້ອນຮັບບຸນທາດຫລວງ! ຈະມີບໍລິການລົດເມ (ຟຣີ) ໄປທ່ຽວງານບຸນທາດຫຼວງ ດ້ວຍ 9 ເສັ້ນທາງ ເລີ່ມວັນທີ 20 – 24 ພະຈິກ 2026



ເລີ່ມໃຫ້ບໍລິການລົດເມຟຣີ 9 ສາຍທາງແຕ່ວັນທີ 20 - 24/11/2026 ເວລາ ບໍລິການຟຣີເລີ່ມ 17:00 PM - 24:00 PM ລາຍລະອຽດດັ່ງລຸ່ມນີ້:

ໃນວັນທີ 11 ພະຈິກ 2026 ຜ່ານມາ, ທ່ານ ບຸນຍະວັດ ນິລະໄຊ ຫົວໜ້າພະແນກໂຍທາທິການ ແລະ ຂົນສົ່ງ ນະຄອນຫຼວງວຽງຈັນ ໄດ້ໃຫ້ສຳພາດຕໍ່ສື່ມວນຊົນ ກ່ຽວກັບການກະກຽມຄວາມພ້ອມດ້ານການຂົນສົ່ງ ແລະ ການຈັດລະບຽບການສັນຈອນໃນງານບຸນນະມັດສະການພະທາດຫຼວງວຽງຈັນ ເຊິ່ງຈະຈັດຂຶ້ນຢ່າງເປັນທາງການ ລະຫວ່າງວັນທີ 20 – 24 ພະຈິກ 2026 ນີ້.

ເຊິ່ງ 9 ສາຍທາງມີດັ່ງນີ້:

1. ດົງໂດກ-ວົງວຽນ 450 ປີ (ອອກທຸກໆ 25 ນາທີ)

2. ສວນເຈົ້າຟ້າງຸ່ມ-ວົງວຽນ 450 ປີ (ອອກທຸກໆ 25 ນາທີ)

3. ນາຊາຍ-ສີເກີດ-ສີໄຄ-ຕະຫຼາດເຊົ້າ (ອອກທຸກໆ 40 ນາທີ)

4. ບ້ານຫ້ອມ-ຕະຫຼາດເຊົ້າ (ອອກທຸກໆ 40 ນາທີ)

5. ທ່າເດື່ອ-ຊຽງຄວນ-ຕະຫຼາດເຊົ້າ (ອອກທຸກໆ 40 ນາທີ)

6. ນາລ້ອງ-ໄອເຕັກ-ທາດຫຼວງ (ອອກທຸກໆ 50 ນາທີ)

7. ດົງຄຳຊ້າງ-ທາດຫຼວງ-ໄອເຕັກ (ອອກທຸກໆ 40 ນາທີ)

8. ວົງວຽນໜອງໄຮ-ໄອເຕັກ-ທາດຫຼວງ (ອອກທຸກໆ 30 ນາທີ)

9. ທ່າງ່ອນ-ວົງວຽນ 450 ປີ (ອອກທຸກໆ 35 ນາທີ)

ສອບຖາມຂໍ້ມູນ:

020 96834578 & amp; 021 215 587

020 5988 0264

020 5164 0994

ທີ່ມາ: Vientiane City 2 Bus Service - ລົດເມນະຄອນຫຼວງວຽງຈັນ

ໂຄສະນາ

ລົງໂຄສະນາ ໃນ ມະຫາສານ ລາຍວັນ

ໜັງສືພິມ PDF ປະຈຳວັນ · ຈອງເປັນລາຍວັນ, ລາຍອາທິດ ຫຼື ລາຍເດືອນ · ທີມງານອອກແບບໃຫ້ຟຣີ

WhatsApp 020 5888 6182

◆ ເຕັກໂນໂລຊີ · 11:21 ໂມງ · ອ່ານ 8 ຄັ້ງ

ສະເປຊເອັກຊ໌ ສ້າງປະຫວັດສາດໃໝ່! ໃຊ້ແຂນກົນຍັກ “ເມຄາຊິລລາ” ຈັບຍານອະວະກາດສະຕາຊິບກັບຄືນສູ່ຖານປ່ອຍໄດ້ສຳເລັດເປັນຄັ້ງທຳອິດ



ບໍລິສັດ ສະເປຊເອັກຊ໌ (SpaceX) ຂອງ ອີລອນ ມັສກ໌ ປະສົບຜົນສຳເລັດຄັ້ງສຳຄັນໃນວົງການອະວະກາດ ດ້ວຍການໃຊ້ແຂນກົນຂະໜາດຍັກ “ເມຄາຊິລລາ” (Mechazilla) ຈັບຍານອະວະກາດ “ສະຕາຊິບ” (Starship) ທີ່ກັບຄືນຈາກອະວະກາດໄດ້ສຳເລັດເປັນຄັ້ງທຳອິດ ທີ່ຖານປ່ອຍຈະຫຼວດສະຕາເບສ ໃນລັດເທັກຊັດ ສະຫະລັດ ຫຼັງສຳເລັດພາລະກິດໂຄຈອນຮອບໂລກ 14 ຮອບ ແລະ ປ່ອຍດາວທຽມສະຕາລິ້ງກ໌ 26 ດວງ ຖືເປັນອີກກ້າວສຳຄັນຂອງການພັດທະນາລະບົບຈະຫຼວດທີ່ສາມາດນຳກັບມາໃຊ້ໃໝ່ໄດ້.

ບໍລິສັດ ສະເປຊເອັກຊ໌ (SpaceX) ຂອງ ອີລອນ ມັສກ໌ ປະສົບຜົນສຳເລັດຄັ້ງປະຫວັດສາດ ໃນການທົດສອບ ບິນຄັ້ງທີ 15 ຂອງລະບົບຈະຫຼວດທີ່ມີຂະໜາດໃຫຍ່ ແລະ ມີພະລັງຂັບເຄື່ອນສູງທີ່ສຸດໃນໂລກ ໂດຍສາມາດໃຊ້ແຂນກົນຂະໜາດຍັກ ຫຼື ທີ່ເອີ້ນວ່າ “ເມຄາຊິລລາ” (Mechazilla) ທີ່ຕິດຕັ້ງຢູ່ເທິງຫໍປ່ອຍຈະຫຼວດ ຂອງຖານສະຕາເບສ ໃນລັດເທັກຊັດ ຈັບຍານອະວະກາດສະຕາຊິບທີ່ເດີນທາງກັບມາຈາກວົງໂຄຈອນໄດ້ສຳເລັດເປັນຄັ້ງທຳອິດ ເມື່ອວັນເສົາຜ່ານມາ (14 ພະຈິກ).

ຍານສະຕາຊິບທີ່ມີຄວາມສູງເຖິງ 52 ແມັດ ໄດ້ພຸ່ງຜ່ານກຸ່ມເມກໜາເໜືອຊາຍຝັ່ງອ່າວເມັກຊິໂກ ກ່ອນຈະຈຸດເຄື່ອງຈັກເພື່ອພິກຕົວກັບມາຢູ່ໃນທ່າຕັ້ງຊື່ ແລະ ຄ່ອຍໆ ຫຼຸດລະດັບລົງຢ່າງນຸ່ມນວນ ທ່າມກາງສຽງຄຳລາມຂອງເຄື່ອງຈັກ ຈົນສະລັກຍຶດບໍລິເວນສ່ວນເທິງຂອງຍານ ສາມາດກ່ຽວເຂົ້າກັບແຂນກົນຂະໜາດຍັກເທິງຖານປ່ອຍທີ 2 ໄດ້ຢ່າງແມ່ນຍຳ ທ່າມກາງສຽງໂຫ່ຮ້ອງສະແດງຄວາມຍິນດີຂອງຝູງຊົນທີ່ມາລໍຖ້າຊົມຢູ່ບໍລິເວນຊາຍຫາດ.

ຍານສະຕາຊິບຖືກສົ່ງຂຶ້ນສູ່ອະວະກາດເມື່ອວັນສຸກຜ່ານມາ ໂດຍໃຊ້ຈະຫຼວດຂັບດັນທ່ອນລຸ່ມ “ຊຸເປີເຮັບວີ” (Super Heavy) ເປັນຕົວຂັບເຄື່ອນ. ຕົວຍານໄດ້ໂຄຈອນຮອບໂລກເຖິງ 14 ຮອບ ໃຊ້ເວລາລວມ 22 ຊົ່ວໂມງເຄິ່ງ ແລະ ປະຕິບັດພາລະກິດປ່ອຍດາວທຽມອິນເຕີເນັດ ສະຕາລິ້ງກ໌ (Starlink) ຈຳນວນ 26 ດວງ ທີ່ລະດັບຄວາມສູງ 260 ກິໂລແມັດ ໄດ້ສຳເລັດ.ແນວໃດກໍຕາມ ຫຼັງຈາກປ່ອຍຍານໄດ້ປະມານ 10 ນາທີ ຈະຫຼວດຂັບດັນຊຸເປີເຮັບວີເກີດບັນຫາທາງເຕັກນິກໃນຂະນະກັບຄືນສູ່ໂລກ ເຮັດໃຫ້ຕ້ອງປ່ຽນເສັ້ນທາງໄປລົງຈອດໃນອ່າວເມັກຊິໂກ ແທນທີ່ຈະກັບມາຖືກຈັບໂດຍແຂນກົນຕາມແຜນການ.

ສິ່ງຜົນໃຫ້ສະເປຊເອັກຊ໌ຍັງບໍ່ສາມາດກູ້ຄືນຈະຫຼວດທັງ 2 ທ່ອນໄດ້ພ້ອມກັນໃນພາລະກິດດຽວ.ສຳລັບການເດີນທາງກັບສູ່ໂລກຂອງຍານສະຕາຊິບໃນວັນເສົາ ຍານໄດ້ຈຸດເຄື່ອງຈັກເພື່ອຫຼຸດລະດັບຄວາມໄວຈາກຄວາມໄວໃນວົງໂຄຈອນທີ່ຫຼາຍກວ່າ 17,000 ໄມຕໍ່ຊົ່ວໂມງ ພ້ອມຝ່າຄວາມຮ້ອນສູງຈາກການສຽດສີກັບຊັ້ນບັນຍາກາດ.

ໂດຍ ລາຣ໌ສ ແບລັກມໍ (Lars Blackmore) ວິສະວະກອນອາວຸໂສ ຂອງສະເປຊເອັກຊ໌ ເປີດເຜີຍວ່າ ເສັ້ນທາງບິນກັບຖືກອອກແບບຢ່າງລະອຽດ ເພື່ອຫຼີກລ່ຽງເຂດຊຸມຊົນ ໂດຍຍານບິນຜ່ານພື້ນທີ່ທະເລຊາຍທີ່ມີປະຊາກອນໜ້ອຍ ກ່ອນຈະບິນອ້ອມເມືອງຕ່າງໆ ໃນຮ່ອມພູຣິໂອກຣານເດ ແລະ ເຂົ້າສູ່ຖານປ່ອຍຈາກທາງທິດຕາເວັນອອກ.ທັ້ງນີ້ ພາຍໃນບໍ່ກີ່ຊົ່ວໂມງຫຼັງການລົງຈອດ ອີລອນ ມັສກ໌ ແລະ ທີມວິສະວະກອນໄດ້ເຂົ້າກວດສອບ ສະພາບຂອງຍານທັນທີ ໂດຍມັສກ໌ໄດ້ໂພສ ຮູບພາບ ແລະ ວິດີໂອຜ່ານແພລດຟອມ X ພ້ອມຂໍ້ຄວາມວ່າ “Ship 42 ເບິ່ງດີເລີດ ຫຼາຍ!”ກ່ອນໜ້ານີ້ ສະເປຊເອັກຊ໌ເຄີຍໃຊ້ແຂນກົນຈັບຈະຫຼວດຂັບດັນທ່ອນລຸ່ມໄດ້ສຳເລັດມາແລ້ວ 3 ຄັ້ງ ແຕ່ການຈັບ “ຍານອະວະກາດ” ສ່ວນເທິງນັ້ນມີຄວາມຊັບຊ້ອນຫຼາຍກວ່າ ເນື່ອງຈາກຍານຕ້ອງກັບຄືນຈາກລະດັບຄວາມສູງທີ່ຫຼາຍກວ່າ ແລະ ມີຄວາມໄວສູງກວ່າຫຼາຍ.ເຄລຕັນ ສະວອບ (Clayton Swope) ຜູ້ຊ່ຽວຊານດ້ານອະວະກາດຈາກສູນຍຸດທະສາດ ແລະ ການສຶກສາສາກົນ (CSIS) ລະບຸວ່າ ນີ້ແມ່ນຄວາມສຳເລັດດ້ານວິສະວະກຳຄັ້ງໃຫຍ່ ທີ່ພິສູດວ່າແນວຄິດການພັດທະນາຍານອະວະກາດທີ່ສາມາດນຳກັບມາໃຊ້ໃໝ່ໄດ້ທັງໝົດນັ້ນ ມີຄວາມເປັນໄປໄດ້ໃນທາງປະຕິບັດ.

ຂະນະທີ່ ແຄັດລິນ ເຄີລີ (Kathleen Curlee) ນັກວິເຄາະຈາກມະຫາວິທະຍາໄລຈອດທາວ ເຫັນວ່າ ສະເປຊເອັກຊ໌ຍັງຕ້ອງພິສູດຄວາມສະຖຽນຂອງລະບົບ ໂດຍຕ້ອງທົດລອງເຮັດຊ້ຳອີກຫຼາຍຄັ້ງ ເພື່ອສ້າງຄວາມເຊື່ອໝັ້ນໃນການນຳໃຊ້ສຳລັບພາລະກິດສຳຄັນ.ດ້ານ ຈາເຣັດ ໄອແຊັກແມນ (Jared Isaacman) ຜູ້ອຳນວຍການອົງການນາຊາ (NASA) ໄດ້ກ່າວຊົມເຊີຍຄວາມສຳເລັດຄັ້ງນີ້ວ່າ “ປານກັບເວດມົນ” ແລະ ຊ່ວຍໃຫ້ມະນຸດຊາດເຂົ້າໃກ້ດວງຈັນອີກກ້າວໜຶ່ງ. ໂດຍນາຊາໄດ້ເຮັດສັນຍາມູນຄ່າຫຼາຍກວ່າ 4,000 ລ້ານໂດລາ ເພື່ອນຳໃຊ້ຍານສະຕາຊິບເປັນຍານລົງຈອດເທິງດວງຈັນ ໃນໂຄງການອາຣ໌ເຕມິສ (Artemis) ເຊິ່ງມີເປົ້າໝາຍສົ່ງມະນຸດກັບໄປຢຽບດວງຈັນອີກຄັ້ງໃນປີ 2028.ແນວໃດກໍຕາມ ສະເປຊເອັກຊ໌ທີ່ໄດ້ລົງທຶນໃນໂຄງການນີ້ໄປແລ້ວຫຼາຍກວ່າ 15,000 ລ້ານໂດລາ ຍັງມີບັນຫາສຳຄັນດ້ານວິສະວະກຳທີ່ຕ້ອງເລັ່ງແກ້ໄຂ ເຊັ່ນ: ເຕັກໂນໂລຊີການເຕີມນ້ຳມັນເຊື້ອໄຟລະຫວ່າງຍານສະຕາຊິບໃນອະວະກາດ ເຊິ່ງມີຄວາມຈຳເປັນຢ່າງຍິ່ງສຳລັບການເດີນທາງໄລຍະໄກໄປຍັງດວງຈັນ ແລະ ດາວອັງຄານ.

ຂະນະທີ່ແຜ່ນກັນຄວາມຮ້ອນຮູບຫົກຫຼ່ຽມສີດຳຫຼາຍຮ້ອຍແຜ່ນທີ່ຫຸ້ມຢູ່ຕົວຍານ ເພື່ອປ້ອງກັນຄວາມຮ້ອນໃນຂະນະກັບເຂົ້າສູ່ຊັ້ນບັນຍາກາດ ຍັງບໍ່ສາມາດນຳກັບມາໃຊ້ໃໝ່ໄດ້ທັນທີໂດຍບໍ່ຕ້ອງສ້ອມບຳລຸງ ເຊິ່ງບໍລິສັດກຳລັງເລັ່ງພັດທະນາຮຸ່ນໃໝ່.ອີລອນ ມັສກ໌ ຕັ້ງເປົ້າໝາຍໃຫ້ຍານສະຕາຊິບສາມາດປະຕິບັດງານໄດ້ຢ່າງວ່ອງໄວຄືກັບເຮືອບິນໂດຍສານ ທີ່ສາມາດຂຶ້ນ-ລົງໄດ້ທຸກໆ 1 ຊົ່ວໂມງ ເພື່ອຮອງຮັບທຸລະກິດດາວທຽມສະຕາລິ້ງກ໌ ການສ້າງສູນຂໍ້ມູນໃນວົງໂຄຈອນ ລວມທັງການຕັ້ງຖິ່ນຖານຂອງມະນຸດເທິງດາວອັງຄານໃນອະນາຄົດ.ທັ້ງນີ້ ຫຼັງຈາກສະເປຊເອັກຊ໌ໄດ້ນຳບໍລິສັດເຂົ້າຈົດທະບຽນໃນຕະຫຼາດຫຼັກຊັບເມື່ອເດືອນມິຖຸນາຜ່ານມາ ແລະ ສາມາດລະດົມທຶນໄດ້ສູງເຖິງ 85,700 ລ້ານໂດລາ ບໍລິສັດໄດ້ທຸ່ມງົບປະມານຂະຫຍາຍກຳລັງການຜະລິດຢ່າງໜັກ.

ໂດຍເຈົ້າໜ້າທີ່ສະເປຊເອັກຊ໌ ເປີດເຜີຍໃນລະຫວ່າງພາສີມອນຊຶມຢັ້ງຊຶມໂຮງງານຂະໜາດ 1 ລ້ານຕາລາງຟຸດ ທີ່ຖານສະຕາເບສວ່າ ປັດຈຸບັນບໍລິສັດມີກຳລັງການຜະລິດຍານສະຕາຊິບໄດ້ 1 ລຳ ໃນທຸກໆ 2 ອາທິດ ແລະ ຜະລິດຈະຫຼວດຂັບດັນຊຸເປີເຮັບວີໄດ້ 1 ລຳ ໃນທຸກໆ 4 ອາທິດ.ທີ່ມາ: Reuters

ເຕັກໂນໂລຊີ · 14:23 ໂມງ · ອ່ານ 6 ຄັ້ງ

Microsoft ເປີດເຜີຍສະຖິຕິຫຼ້າສຸດ ຄົນລາວໃຊ້ງານ AI ເພີ່ມຂຶ້ນຕໍ່ເນື່ອງ ແຕະລະດັບ 8.4% ຂອງປະຊາກອນໄວເຮັດວຽກ



ລາຍງານຫຼ້າສຸດຈາກ Microsoft ຊີ້ໃຫ້ເຫັນວ່າ ການນຳໃຊ້ປັນຍາປະດິດ (AI) ໃນ ສປປ ລາວ ຍັງຄົງຂະຫຍາຍຕົວຢ່າງຕໍ່ເນື່ອງ ໂດຍມີສັດສ່ວນຜູ້ໃຊ້ງານເພີ່ມຂຶ້ນເປັນ 8.4% ຂອງປະຊາກອນໄວເຮັດວຽກໃນໄຕມາດທີ 2 ຂອງປີ 2026.

ອີງຕາມລາຍງານ Global AI Diffusion Q2 2026 ຂອງ Microsoft ທີ່ເຜີຍແຜ່ໃນເດືອນກັນຍາ 2026 ເຊິ່ງໄດ້ສຳຫຼວດການໃຊ້ງານ Generative AI ໃນກຸ່ມປະຊາກອນໄວເຮັດວຽກ (ອາຍຸ 15-64 ປີ) ຈາກ 147 ເຂດເສດຖະກິດທົ່ວໂລກ ພົບຂໍ້ມູນທີ່ໜ້າສົນໃຈກ່ຽວກັບ ສປປ ລາວ ດັ່ງນີ້:

ຕົວເລກຜູ້ໃຊ້ງານເພີ່ມຂຶ້ນ: ໃນໄຕມາດທີ 2 ຂອງປີ 2026 ສັດສ່ວນຜູ້ໃຊ້ງານ AI ຢ່າງຈິງຈັງໃນ ສປປ ລາວ ຢູ່ທີ່ 8.4% ເຊິ່ງເພີ່ມຂຶ້ນ +0.6% ເມື່ອທຽບໃສ່ໄຕມາດທີ 1 (Q1 2026) ທີ່ຢູ່ໃນລະດັບ 7.8%.

ການເຕີບໂຕທີ່ໂດດເດັ່ນໃນພາກພື້ນ: ກ່ອນໜ້ານີ້ ໃນໄຕມາດທີ 1 Microsoft ຍັງໄດ້ຈັດໃຫ້ ສປປ ລາວ ເປັນໜຶ່ງໃນກຸ່ມປະເທດທີ່ມີຈຳນວນຜູ້ໃຊ້ AI ເຕີບໂຕໄວທີ່ສຸດໃນໂລກ ໂດຍມີອັດຕາການຂະຫຍາຍຕົວສູງກວ່າ 30% ເມື່ອທຽບໃສ່ເຄິ່ງປີທຳອິດຂອງປີ 2025.

ເນັ້ນການໃຊ້ເພື່ອການຮຽນຮູ້: ລາຍງານຈາກ Microsoft On the Issues ລະບຸວ່າ ຜູ້ໃຊ້ງານໃນກຸ່ມປະເທດກຳລັງພັດທະນາ (Global South) ລວມທັງ ສປປ ລາວ ມີສັດສ່ວນການນຳໃຊ້ AI ເພື່ອການຮຽນຮູ້ດ້ວຍຕົນເອງ (Self-directed learning) ແລະ ການສ້າງເນື້ອຫາ (ຮຸບພາບ ແລະ ຂໍ້ຄວາມ) ສູງກວ່າກຸ່ມປະເທດພັດທະນາແລ້ວຢ່າງຊັດເຈນ.

ສິ່ງທ້າທາຍ ແລະ ໂອກາດໃນອະນາຄົດ:

ເຖິງວ່າຕົວເລກຜູ້ໃຊ້ງານໃນລາວຈະເພີ່ມຂຶ້ນຢ່າງຕໍ່ເນື່ອງ ແຕ່ສັດສ່ວນ 8.4% ຍັງຖືວ່າຕ່ຳກວ່າຄ່າສະເລ່ຍທົ່ວໂລກທີ່ຢູ່ໃນລະດັບ 18.8% ແລະ ຄ່າສະເລ່ຍຂອງກຸ່ມປະເທດກຳລັງພັດທະນາທີ່ 16.2%.

ປັດໄຈຫຼັກທີ່ເຮັດໃຫ້ຊ່ອງຫວ່າງການເຂົ້າເຖິງ AI ຍັງກວ້າງຢູ່ ແມ່ນມາຈາກຂໍ້ຈຳກັດດ້ານໂຄງສ້າງພື້ນຖານອິນເຕີເນັດ, ທັກສະດ້ານດິຈິຕອນ ແລະ ກຳແພງດ້ານພາສາລາວທີ່ຍັງມີຂໍ້ມູນໃນລະບົບໜ້ອຍ. ຢ່າງໃດກໍຕາມ Microsoft ຊີ້ວ່າການເຕີບໂຕຂອງໂມເດວ AI ແບບເປີດ (Open-weight models) ທີ່ມີຕົ້ນທຶນຕ່ຳລົງ ຈະເປັນໂອກາດສຳຄັນທີ່ຊ່ວຍໃຫ້ຄົນລາວ ແລະ ທຸລະກິດໃນລາວສາມາດເຂົ້າເຖິງ ແລະ ນຳໃຊ້ AI ໄດ້ງ່າຍຂຶ້ນໃນອະນາຄົດ.

ທີ່ມາ: ລາຍງານ Global AI Diffusion Q2 2026 ໂດຍ Microsoft

Global AI Diffusion - Q2 2026 Trends and Insights

ຂ່າວຕ່າງປະເທດ

ຂ່າວຕ່າງປະເທດ · 11:00 ໂມງ · ອ່ານ 12 ຄັ້ງ

ທ່າເຮືອນິວອໍລີນ ຍື່ນຟ້ອງເອົ້ນຄ່າເສຍຫາຍ 1 ລ້ານໂດລາ ຫຼັງເຮືອບັນທຸກນ້ຳມັນຕຳເຮືອສຳລານ ໃນແມ່ນ້ຳມິສຊິດຊິບປີ



ສຳນັກຂ່າວຕ່າງປະເທດລາຍງານ ເມື່ອວັນທີ 15 ພະຈິກ 2026 ວ່າ ການທ່າເຮືອນິວອໍລີນ ໄດ້ຍື່ນຟ້ອງຕໍ່ສານລັດຖະບານກາງ ເພື່ອຮຽກຮ້ອງຄ່າເສຍຫາຍຫຼາຍກວ່າ 1 ລ້ານໂດລາສະຫະລັດ ຈາກບໍລິສັດເຈົ້າຂອງເຮືອບັນທຸກນ້ຳມັນຊື່ “ແອັດແລນຕິກ ແອສຟັລຕ໌” (Atlantic Asphalt) ແລະ ບໍລິສັດບໍລິຫານຈັດການເຮືອ ຈາກເຫດການເຮືອລຳດັ່ງກ່າວແລ່ນຕຳເຮືອສຳລານໃນແມ່ນ້ຳມິສຊິດຊິບປີ ເມື່ອອາທິດຜ່ານມາ.

ບໍລິສັດເຈົ້າຂອງເຮືອມີຊື່ວ່າ “ເນຟ ຊິບປິ ເອສເອ” (Nave Shipping SA) ຈົດທະບຽນຢູ່ເມືອງມອນໂຣເວຍ ປະເທດໄລບີເຣຍ ແລະ ໄດ້ຮັບການ

ຕໍ່ໜ້າ 13

ທ່າເຮືອນິວອໍລີນ ຍື່ນຟ້ອງເອົາຄ່າເສຍຫາຍ 1 ລ້ານໂດລາ ຫຼັງເ... (ຕໍ່ຈາກໜ້າ 12)

ອຸດໜູນຈາກ “ບໍລິສັດຕໍ່ເຮືອແຫ່ງລັດຈີນ” (CSSC) ສ່ວນບໍລິສັດທີ່ຮັບຜິດຊອບບໍລິຫານເຮືອມີຊື່ວ່າ “ໂທມ ຊິບ ເມເນດ ເຈີເມັນ ຈຳກັດ” (Thome Ship Management Pte Ltd).

ໃນຄຳຟ້ອງລະບຸວ່າ ອຸບັດຕິເຫດດັ່ງກ່າວເກີດຈາກຄວາມປະໝາດເລີນເລີ່ຂອງຝ່າຍເຮືອບັນທຸກນ້ຳມັນ ແລະ ບໍ່ໄດ້ນຳໃຊ້ມາດຕະການປ້ອງກັນທີ່ມີຢູ່ເພື່ອຫຼີກລ່ຽງການຕຳກັນ.

ຂະນະທີ່ໜ່ວຍຍາມຝັ່ງສະຫະລັດຄາດຄະເນວ່າ ສາເຫດອາດເກີດຈາກການສູນເສຍການຄວບຄຸມທາງເສືອ ເຮືອ.ນອກຈາກນີ້ ການທ່າເຮືອນິວອໍລີນຍັງໄດ້ຮ້ອງຂໍໃຫ້ສານມີຄຳສັ່ງຍຶດເຮືອບັນທຸກນ້ຳມັນລຳດັ່ງກ່າວ ແລະ ນຳອອກຂາຍທອດຕະຫຼາດ ເພື່ອນຳເງິນມາຊົດເຊີຍຄ່າເຮັດຄວາມສະອາດ ຄ່າກວດສອບ ແລະ ຄ່າສ້ອມແປງຄວາມເສຍຫາຍຂອງທ່າເຮືອ.

ທັງນີ້ ເຫດອຸບັດຕິເຫດດັ່ງກ່າວເກີດຂຶ້ນໃນຊ່ວງບ່າຍວັນສຸກທີ່ຜ່ານມາ (13 ພະຈິກ) ໂດຍເຮືອບັນທຸກນ້ຳມັນ “ແອັດແລນຕິກ ແອສຟັລ” ໄດ້ພຸ່ງເຂົ້າຕຳເຮືອສຳລານແບບມີກົງລໍ້ຂັບເຄື່ອນທ້າຍເຮືອ ຊື່ “ອາເມຣິກັນ ເຮຣິເທຈ” (American Heritage) ທີ່ຈອດທຽບທ່າຢູ່ ຈີນເຮືອສຳລານປັ້ນຕະແຄງ ແລະ ຈົມລົງໃນນ້ຳບາງສ່ວນ ຂະນະທີ່ອາຄານຜູ້ໂດຍສານຂອງທ່າເຮືອກໍໄດ້ຮັບຄວາມເສຍຫາຍຢ່າງໜັກ.ໃນເວລາເກີດເຫດ ມີຜູ້ໂດຍສານຢູ່ເທິງເຮືອສຳລານປະມານ 129 ຄົນ ໂດຍບໍ່ລວມລູກເຮືອ.

ເຈົ້າໜ້າທີ່ກູ້ໄພ ຕຳຫຼວດ ແລະ ເຮືອລາກຈູງ ໄດ້ຮ່ວມກັນຊ່ວຍເຫຼືອຜູ້ປະສົບເຫດຫຼາຍກວ່າ 100 ຄົນຂຶ້ນຈາກແມ່ນ້ຳໄດ້ທັນໝົດ. ມີຜູ້ບາດເຈັບ 32 ຄົນ ຖືກນຳສົ່ງໂຮງໝໍ ແຕ່ບໍ່ມີຜູ້ໃດມີອາການສາຫັດ ແລະ ບໍ່ມີລາຍງານຜູ້ສູນຫາຍ. ເຮັດໃຫ້ເຈົ້າໜ້າທີ່ຍົກຍ້ອງເຫດການນີ້ວ່າເປັນ “ປາຍິຫານແຫ່ງແມ່ນ້ຳມິສຊິດຊິບປີ”.

ຄະນະກຳມະການຄວາມປອດໄພດ້ານການຂົນສົ່ງແຫ່ງຊາດສະຫະລັດ (NTSB) ເປີດເຜີຍວ່າ ເຈົ້າໜ້າທີ່ສາມາດກູ້ກ່ອງດຳສ່ວນບັນທຶກຂໍ້ມູນ (Data Recorder) ຂອງເຮືອບັນທຸກນ້ຳມັນໄດ້ແລ້ວ ແລະ ຈະອອກລາຍງານເບື້ອງຕົ້ນພາຍໃນ 30 ວັນ ສ່ວນລາຍງານສະບັບສົມບູນອາດໃຊ້ເວລາ 18-24 ເດືອນ.

ທີ່ມາ: ບີບີຊີ (BBC)

◆ ຂ່າວຕ່າງປະເທດ · 16:06 ໂມງ · ອ່ານ 11 ຄັ້ງ

“ອຸທາຫອນຊິມມ້າ! ຕມ.ໜອງຄາຍ ຈັບໜຸ່ມໄທຂະນະຈະຂ້າມມາເຮັດວຽກຢູ່ລາວ ຖືກຫຼອກເປີດຊິມກ່ວາ 100 ເບີ ແລກເງິນ 300 ບາດ”



ເມື່ອວັນທີ 13 ພະຈິກ 2026 ເວລາປະມານ 21:00 ໂມງ, ພັນຕຳຫຼວດໂທ ທິຍາພັດ ຣັງສີພຣາມະນະກຸນ ຮອງຜູ້ກຳກັບການກວດຄົນເຂົ້າເມືອງຈັງຫວັດໜອງຄາຍ, ພັນຕຳຫຼວດໂທ ອະພິຊາດ ຄົນຫາ ສາລະວັດກວດຄົນເຂົ້າເມືອງໜອງຄາຍ ພ້ອມດ້ວຍເຈົ້າໜ້າທີ່ ໄດ້ຈັບກຸມ ທ້າວ ກັນຍາພັດ ອາຍຸ 36 ປີ ຊາວອຳເພີໂນນສັງ ຈັງຫວັດໜອງບົວລຳພູ ຕາມໝາຍຈັບຂອງສານຈັງຫວັດພະນະຄອນສີອະຍຸດທະຍາ.

ຜູ້ຕ້ອງຫາຖືກກ່າວຫາໃນຂໍ້ຫາ “ເປັນຜູ້ສະໜັບສະໜຸນໃນຄວາມຜິດຖານສໍ້ໂກງໂດຍສະແດງຕົນເປັນບຸກຄົນອື່ນ ແລະຍິນຍອມໃຫ້ບຸກຄົນອື່ນນຳໃຊ້ ຫຼືຢືມໃຊ້ເລກໝາຍໂທລະສັບມືຖືຂອງຕົນ ໂດຍຮູ້ ຫຼືຄວນຮູ້ວ່າຈະຖືກນຳໄປໃຊ້ໃນການກະທຳຜິດກ່ຽວກັບອາຊະຍາກຳທາງເຕັກໂນໂລຊີ ຫຼືຄວາມຜິດທາງອາຍາອື່ນໆ” ໂດຍມີພະນັກງານສອບສວນ ສະຖານີຕຳຫຼວດບາງໄຊ ຈັງຫວັດພະນະຄອນສີອະຍຸດທະຍາ ເປັນຜູ້ຮັບຜິດຊອບຄະດີ.

ຜູ້ຕ້ອງຫາໃຫ້ການວ່າ ໃນປະມານປີ 2025 ຕົນເຮັດວຽກເປັນແມ່ບ້ານລາຍວັນຢູ່ເຂດບາງພລີ ຈັງຫວັດສະໝຸດປຣາການ. ຕໍ່ມາ ໃນຊ່ວງທ້າຍເດືອນທັນວາ 2025 ຕົນໄດ້ຮູ້ຈັກຜູ້ຊາຍ 2 ຄົນ ເຊິ່ງທັງສອງມີລັກສະນະເປັນເກ.

ຜູ້ຊາຍທັງສອງໄດ້ຂັບລົດມາຈອດຢູ່ສະໜາມວໍເລ່ບານໃກ້ໂຮງຮຽນເກອະລິນ ເຂດບາງພລີ ຈັງຫວັດສະໝຸດປຣາການ ແລ້ວເຂົ້າມາຂໍຫຼິ້ນກິລາວໍເລ່ບານນຳກຸ່ມຂອງຕົນ ໃນຂະນະທີ່ກຳລັງຫຼິ້ນກິລາຢູ່. ຫຼັງຈາກຫຼິ້ນກິລາແລ້ວ ຜູ້ຊາຍທັງສອງໄດ້ຊັກຊວນຕົນໄປດື່ມເຫຼົ້າຕໍ່ຢູ່ຂ້າງສະໜາມວໍເລ່ບານ ຈົນຮອດຕອນເຊົ້າ.

ຈາກນັ້ນ ຜູ້ຊາຍທັງສອງບອກວ່າ ຕ້ອງການຊິມໂທລະສັບໄປຫຼິ້ນເກມອອນລາຍ ແລະຂໍໃຫ້ຕົນໄປທີ່ຫ້າງໂອບິນສັນ ສາຂາເທບາຮັກ ເພື່ອເປີດໃຊ້ບໍລິການຊິມໂທລະສັບເຄືອຂ່າຍ AIS. ຫຼັງຈາກນັ້ນ ຜູ້ຊາຍທັງສອງໄດ້ໃຫ້ເງິນຕົນ 300 ບາດ ໂດຍບອກວ່າໃຫ້ເປັນຄ່າດື່ມເຫຼົ້າ. ຫຼັງຈາກນັ້ນກໍບໍ່ໄດ້ຕິດຕໍ່ກັນອີກ.

ຕໍ່ມາ ໃນເດືອນກຸມພາ 2026 ຕົນໄດ້ຮັບໝາຍຮຽກຈາກສະຖານີຕຳຫຼວດພະປະແດງ ກ່ຽວກັບຄະດີຊິມມ້າ ຫຼື ການເປີດເບີໂທລະສັບໃຫ້ຜູ້ອື່ນນຳໃຊ້. ຕົນຈຶ່ງຮູ້ວ່າມີການເປີດເບີໂທລະສັບເຄືອຂ່າຍ AIS ໃນຊື່ຂອງຕົນຫຼາຍກວ່າ 100 ເບີ ຈຶ່ງຟ້ອງແຈ້ງຍົກເລີກບໍລິການທັງໝົດທັນທີ.

ສຳລັບໃນມື້ທີ່ຖືກຈັບກຸມ ຕົນກຳລັງຈະເດີນທາງໄປເຮັດວຽກຢູ່ ສປປ ລາວ ແຕ່ຖືກເຈົ້າໜ້າທີ່ຈັບກຸມຕາມໝາຍຈັບດັ່ງກ່າວ.

ພາຍຫຼັງການຈັບກຸມ ເຈົ້າໜ້າທີ່ກວດຄົນເຂົ້າເມືອງຈັງຫວັດໜອງຄາຍ ໄດ້ຄວບຄຸມຕົວຜູ້ຕ້ອງຫາ ສົ່ງໃຫ້ພະນັກງານສອບສວນ ສະຖານີຕຳຫຼວດບາງໄຊ ຈັງຫວັດພະນະຄອນສີອະຍຸດທະຍາ ເພື່ອດຳເນີນຄະດີຕາມກົດໝາຍຕໍ່ໄປ.

ທີ່ມາ: ກວດຄົນເຂົ້າເມືອງຈັງຫວັດໜອງຄາຍ

ໂຄສະນາ
ລົງໂຄສະນາ ໃນ ມະຫາສານ ລາຍວັນ
ໜັງສືພິມ PDF ປະຈຳວັນ · ຈອງເປັນລາຍວັນ, ລາຍອາທິດ ຫຼື ລາຍເດືອນ · ທີມງານອອກແບບໃຫ້ຟຣີ
WhatsApp 020 5888 6182

ຂ່າວຕ່າງປະເທດ · 13:40 ໂມງ · ອ່ານ 9 ຄັ້ງ

ຜູ້ນຳອິນໂດເນເຊຍຂໍໂທດມາເລເຊຍ ແລະ ສິງກະໂປ ກໍລະນີໝອກຄວັນໄຟປ່າລາມຂ້າມຊາຍແດນ



ປະທານາທິບໍດີ ປຣາໂบໂอ ซุบยันโต ກ່າວຂໍໂທດ ມາເລເຊຍ ແລະ ສິງກະໂປ ຫຼັງໄຟປ່າຮຸນແຮງໃນ ອິນໂดเนเซยก่อหมอกควันพิดปกคลุมประเทดเพื่อนบ้าน ยอดพื้นที่ถูกเผาไหม้ปีนี้แล้ว 18 ล้านไร่.

ວັນທີ 16 ພະຈິກ 2026, ปะทานาทิบดี ปรา โบโอ ซุบยันโต แห่งอินโดเนเซย ก่าอะโหด มาเลเซย และ สิงกะโป หลังเกิดหมอกควันพิดจาก ไฟป่าครั้งใหย่ในประเทด สิ่งผินให้มีมลละพิดทาง อากาดลอยข้ามชายแดนไปปกคุมน่านฟ้าของประเทด เพื่อนบ้าน.

โดยท่าน ปรา โบโอ ก่าอละหว่างการประชุม สุดยอดสะมาถิมประชาชาดแห่งอาซิตาเอ้นออกสยง ใต้ หรือ อาเซยน ที่นะถอนหลวงมะนิลา ประเทดฟิลิบ ปิน ว่ายันหาหมอกควันข้ามชายแดนบ่แม่นถอามผิด ของอินโดเนเซย และ ยืนยันว่าอินโดเนเซย พะยายามย่างเต็มที่ในการยับมือกับสะถานะการ.

ย่างใดกำตาม, ผู้นำอินโดเนเซยก่าอต่ผู้นำประเทดสะมาชิกอาเซยนว่า ในนามลัดถะบาน และ ปะชาชินอินโดเนเซย ต้องขอะไพหาภารกะทำของ อินโดเนเซยเร็ดให้ปะชาชินใน สิงกะโป และ มาเลเซยต้องได้รับ ถอามเดือดร้อน.

ผู้นำอินโดเนเซยเปิดเผยด้วย ว่า ทางการอินโดเนเซยถอนสำ ปะทานที่ดินของบໍลิสัดเอกะชิน 17 แห่ง เชื่งก่ยวข้องกับเหดไฟป่า และ กำลังสอบสอบบໍลิสัดอิก 26 แห่ง พ้อมละบุว่าอินโดเนเซยละดิมกำลัง เจ้าพ้าที่ 71,000 คินเข้าถอบถุมไฟ ป่า โดยมิเจ้าพ้าที่ดับเพิงเสยชิวิด 16 คิน และ เธลิถอบเติ 2 ล้าสูนเสยใน ละหว่างปะติบัดพาละภิด.

โดยไฟป่าที่เกิดขึ้นย่างต่เนื่อง หลายเดือนเทิงเกาะบໍเนิา, สุมาตรา และ ปาปัว ได้เผาผานพื้นที่ป่าละหาด ใหย่ ก่ให้เกิดมีนละพิดทางอากาดที่ สิ่งผินกะทบต่ปะชาชินหลายแสนคินใน อินโดเนเซย ก่อนหมอกควันจะแผ่ กะจายข้ามชายแดนไปยังมาเลเซย และ สิงกะโป.

ข้อมูนจาก นูซันตารา แอดลาส เชื่งเป็นหน่วยงานติดตามการตัดไม้ ทำลายป่า ละบุว่า นับตั้งแต่ต้นปี 2026 ไฟป่าได้เผาผานพื้นที่ไปแล้ว ประมาน 18 ล้านไร่ ถีดเป็นพื้นที่ใหย่ กว่ากรุงลอนดอนเถิง 18 เท่า. แม้ อินโดเนเซยจะประเชินกับไฟป่าเป็น ประจำในช่วงละดูแล้ง แต่สะถานะการ ในปีนี้มีถอามรุนแรงเป็นพิเสด.

ขะนะที่นักวิใจลายบุเมื่อ สับปะดาที่ผ่านมาว่า ปะกิดการ เอลนิโยที่รุนแรง, การป่รับแปง สะพาบพูมอากาด, การตัดไม้ทำลาย ป่า และ การละบายบ้าออกจากพื้นที่ ป่าหนองชุ่มเพื่อเร็ดบ่แร่ และ พื้นที่ เพาะปูก ล้อมแต่เป็นปัดไจที่เร็ดให้ ละดูไฟป่าของอินโดเนเซยในปีนี้หะวิ ถอามรุนแรงขึ้น.

ข่าวต่างประเทศ · 13:02 ໂมງ · ອ่ານ 8 ຄັ້ງ

แม่ตู้ถีบอาเมธิกาอายุ 96 ปี ได้เดินทางท่องท่ยวถีบทุกทะอิบกับหลานชาย หลังเร็ดหนังสือผ่านแดนถั้งทำอิดในตอนอายุ 91 ปี



แม่ตู้เล่มเร็ดหนังสือผ่านแดนถั้งทำอิดตอนอายุ 91 ปี ปัดจุบันในไอ 96 ปี ได้เดินทางท่องท่ยวถีบทุกทะอิบกับหลานชาย

แม่ตู้จอย ไอ 96 ปี ผู้เดินทางท่องท่ยวถีบทั้ง 7 ทะอิบที่อโลก.พาบ: Instagram / @grandmajoysroadtrip

แม่ตู้จอย ไธอัน (Joy Ryan) ชาวอาเมธิกา ไอ 96 ปี สำงเลื่องลาวที่พ้าปะทับใจ หลังจากสามาด เดินทางท่องท่ยวถีบทั้ง 7 ทะอิบที่อโลก ร่วมกับ หลานชาย แบธด ไธอัน (Brad Ryan) โดยที่นางหา กำเร็ดหนังสือผ่านแดนถั้งทำอิดในไอ 91 ปี.

เลื่องลาวของแม่ตู้จอยเล่มเป็นที่สินใจในโลก ออนลาย หลังจากนาง และ หลานชาย ร่วมกันเดินทาง ท่องท่ยวอุทิยานแห่งชาดทั้ง 63 แห่ง ของสะหะลัด และ สำงสะถิติเป็นผู้มีอายุสูงที่สุดที่เดินทางถีบอุทิยาน แห่งชาดทั้งหมดได้. แต่ทั้งสองยังบ่หยุด พยงเท่านั้น เพาะยังมีถอามฝันที่ยากออกไปสำหลวดโลกภายหน้า.

แม่ตู้จอยได้เห็นพูเขาเป็นถั้งทำอิดในปี 2015.

พาบ: Brad Ryan

จุดเล่มต้นของการเดินทางถั้งนี้ ย้อนแบธดต้องการฟื้นฟูถอามสำพันกับถอยถือฝ่ายพ่ หลังจากห่างเหินกันมาดินเถิง 10 ปี เนื่องจากบาดแผลทางจิดใจในอะดิด. ในปี 2015 แบธด ได้ติดต่หาแม่ตู้จอย และ ชวนนางไปตั้งแถ้มที่อุทิยานแห่งชาดเกรดสะโมกกี (Great Smoky Mountains) เพาะรู้ว่าแม่ตู้บ่เคยเห็นพูเขามาก่อน.

จากการเดินทางถั้งนั้น ทั้งสองได้กับมาสำงถอามสำพันที่แน่นแฟ้นอิกถั้ง พ้อมกับออกเดินทางไปย้ำมชิมอุทิยานแห่งชาดที่อสะหะลัด จินถีบทั้ง 63 แห่งในเดือนพิดสะพา 2023.

ต่มา เมื่อแม่ตู้จอยมีอายุ 91 ปี นางได้เร็ดหนังสือผ่านแดนถั้งทำอิด และ เล่มออกเดินทางสู่ต่างประเทดกับหลาน ชาย. ทั้งสองเคยไปพิบช้างยู่ประเทด เถมยา ไปชิมปาสาดเก่าแก่ในประเทด ไอแลน และ เดินทางมาธอดประเทด ไท เชื่งได้มีโอกาดสินทะนากับพะสิง พุดทะสาสะหนา.

แม่ตู้จอย และ แบธด ใน ละหว่างการเดินทางท่องท่ยวยู่ประเทด ไท.

พาบ: Brad Ryan

ในเดือนกันยา นาง และ หลาน ชายได้เดินทางไปประเทดไท ก่อนจะ

ต่หน้า 15

ແມ່ຕູ້ຄົນອາເມຣິກາອາຍຸ 96 ປີ ໄດ້ເດີນທາງທ່ອງທ່ຽວຄົບທຸກທ... (ຕໍ່ຈາກໜ້າ 14)

ເດີນທາງຕໍ່ໄປຍັງປະເທດອິດສະຕຣາເອລ ເຊິ່ງເປັນທະວີບສຸດທ້າຍທີ່ນາງຍັງບໍ່ເຄີຍໄປຮອດ. ທີ່ອິດສະຕຣາເອລ ແມ່ຕູ້ຈອຍຮູ້ສຶກປະທັບໃຈກັບຄວາມງົດງາມຂອງປະເທດ ໂດຍສະເພາະການໄດ້ເຫັນໂຄອາລາ ແລະ ລູກໂຄອາລາທີ່ໜ້າຮັກ. ນາງກ່າວວ່າ ອິດສະຕຣາເອລເປັນປະເທດທີ່ງົດງາມຫຼາຍ ແລະ ນາງຮູ້ສຶກດີໃຈທີ່ໄດ້ບັນລຸເປົ້າໝາຍທີ່ຕັ້ງໃຈໄວ້.

ແມ່ຕູ້ ແລະ ຫຼານຊາຍ ຖ່າຍຮູບຮ່ວມກັນໃນລະຫວ່າງການເດີນທາງທ່ອງທ່ຽວຢູ່ປະເທດອິດສະຕຣາເອລ.

ພາບ: Brad Ryan

ການເດີນທາງໄປຍັງສອງທະວີບສຸດທ້າຍ ໄດ້ຮັບການສະໜັບສະໜູນຈາກ Road Scholar ອົງການບໍ່ສະແຫວງຫາກຳໄລທີ່ຈັດການເດີນທາງເພື່ອການຮຽນຮູ້ສຳລັບຜູ້ສູງອາຍຸ.

ນອກຈາກເປັນການເດີນທາງທີ່ເຕັມໄປດ້ວຍຄວາມສຸກແລ້ວ ການຜະຈົນໄພຄັ້ງນີ້ຍັງຊ່ວຍໃຫ້ແຍຣດສາມາດກ້າວຂ້າມບາດແຜໃນອະດີດ ແລະ ເລີ່ມຕົ້ນບົດໃໝ່ຂອງຊີວິດ. ລາວເລົ່າວ່າ ການສົນທະນາກັບພະສົງໜຸ່ມອົງໜຶ່ງໃນປະເທດໄທ ເຮັດໃຫ້ລາວໄດ້ຮຽນຮູ້ເຖິງຄວາມເຊື່ອມໂຍງຂອງມະນຸດ ແລະ ຄວາມສຳຄັນຂອງການບໍ່ຍຶດຕິດກັບອະດີດຫຼາຍຈົນເກີນໄປ.

ທັງສອງຮູ້ສຶກຕື່ນຕາຕື່ນໃຈ ແລະ ປະທັບໃຈກັບໂຄອາລາທີ່ໄດ້ພົບເຫັນໃນປະເທດອິດສະຕຣາເອລ.

ພາບ: Brad Ryan

ປັດຈຸບັນ ທັງສອງມີຜູ້ຕິດຕາມໃນ Instagram ຫຼາຍກວ່າ 100,000 ຄົນ ຈາກການແບ່ງປັນຮູບພາບ ແລະ ເລື່ອງລາວການເດີນທາງ. ແມ່ຕູ້ຈອຍຍັງກາຍເປັນແຮງບັນດານໃຈໃຫ້ຜູ້ຄົນຈຳນວນຫຼາຍ ໂດຍມີຜູ້ຄົນບອກນາງວ່າ ເລື່ອງລາວຂອງນາງເຮັດໃຫ້ພວກເຂົາກ້າເລີ່ມຕົ້ນເຮັດສິ່ງໃໝ່ໆ ທີ່ບໍ່ເຄີຍກ້າຄິດຝັນມາກ່ອນ.

ສຳລັບແມ່ຕູ້ຈອຍ ສິ່ງທີ່ນາງປະທັບໃຈທີ່ສຸດຈາກການເດີນທາງຄືນ້ຳຕົກທີ່ງົດງາມ ແລະ ຜູ້ຄົນທີ່ໄດ້ພົບພໍ້. ນາງກ່າວວ່າ ນ້ຳຕົກເຫຼົ່ານັ້ນແມ່ນຜົນງານທີ່ພຣະເຈົ້າສ້າງຂຶ້ນ ແລະ ສິ່ງທີ່ມະນຸດບໍ່ອາດສ້າງຂຶ້ນໄດ້.

ແບຣດ ແລະ ແມ່ຕູ້ຈອຍ ຖ່າຍຮູບຮ່ວມກັນຢູ່ພະບໍລົມມະຫາລາຊະວັງ (The Grand Palace) ໃນກຸງເທບ, ປະເທດໄທ.

ພາບ: Road Scholar / Rae Ann Bochanyin

ເລື່ອງລາວຂອງແມ່ຕູ້ຈອຍຈຶ່ງບໍ່ແມ່ນພຽງການພິຊິດຄວາມຝັນໃນການເດີນທາງຄົບ 7 ທະວີບເທົ່ານັ້ນ ແຕ່ຍັງເປັນເລື່ອງລາວຂອງຄວາມຜູກພັນໃນຄອບຄົວ ການໃຫ້ໂອກາດຕົນເອງເລີ່ມຕົ້ນໃໝ່ ແລະ ການພິສູດວ່າ ອາຍຸທີ່ຫຼາຍຂຶ້ນບໍ່ແມ່ນອຸປະສັກຕໍ່ການມີຄວາມຝັນ.

ທີ່ມາ: PEOPLE

ຂ່າວຕ່າງປະເທດ · 15:07 ໂມງ · ອ່ານ 6 ຄັ້ງ

ນາຍົກ ການາດາ ເລັ່ງຫາພັນທະມິດດ້ານພະລັງງານຍົກຍ້ອງນອກສະຫະລັດ ກ່ອນຫາລືກັບ ທ່ານ ສີ ຈິ້ນຜິງ ນອກຮອບກອງປະຊຸມ APEC



ທ່ານ ມາກ ຄານີ ນາຍົກລັດຖະມົນຕີການາດາ ໄດ້ເປີດເຜີຍຕໍ່ສື່ມວນຊົນລະຫວ່າງການຢ້ຽມຢາມປະເທດກຳປູເຈຍ ໃນວັນທີ 16 ພະຈິກ 2026 ວ່າ ການາດາຍັງມີພັນທະມິດລາຍອື່ນໆສຳລັບການຜະລິດພະລັງງານ ຫາກລັດຖະບານຂອງປະທານາທິບໍດີ ໂດນັລ ທຣຳ ຜູ້ນຳສະຫະລັດ ບໍ່ຕ້ອງການລະບົບຕ່ອງໂສ້ການສະໜອງ (Supply Chain) ທີ່ເຊື່ອມໂຍງກັນໃນພາກພື້ນອາເມຣິກາເໜືອ.

ທ່ານ ຄານີ ກ່າວວ່າ ຕະຫຼາດພະລັງງານໃນພາກພື້ນອາເມຣິກາເໜືອມີຄວາມເຊື່ອມໂຍງກັນໜ້ອຍລົງ ອັນເນື່ອງມາຈາກມາດຕະການທາງການຄ້າຂອງສະຫະລັດ ໂດຍທ່ານໄດ້ອ້າງເຖິງການທີ່ລັດຖະບານທຣຳ ອອກມາດຕະການເກັບພາສີນຳເຂົ້າລົດຍົນທີ່ຜະລິດໃນການາດາ ແລະ ເມັກຊິໂກ ໃນອັດຕາ 25%. ເຖິງວ່າລັດຖະບານການາດາ ແລະ ສະຫະລັດ ຈະໃຊ້ເວລາຫາລືກັນມາຫຼາຍເດືອນ ເພື່ອຫາທາງປັບຫຼຸດພາສີດັ່ງກ່າວ ແຕ່ຈົນເຖິງປັດຈຸບັນກໍຍັງບໍ່ສາມາດບັນລຸຂໍ້ຕົກລົງຮ່ວມກັນໄດ້.

ນາຍົກລັດຖະມົນຕີການາດາຍັງລະບຸຕື່ມວ່າ ຄວາມຮ່ວມມືໃນຂະແໜງພະລັງງານຍົກຍ້ອງລະຫວ່າງການາດາ ແລະ ສະຫະລັດ ຄືພົນລັບທີ່ດີທີ່ສຸດສຳລັບແຮງງານການາດາ, ພາກທຸລະກິດການາດາ ແລະ ຜູ້ບໍລິໂພກຊາວອາເມຣິກັນ ແຕ່ທັງໝົດນີ້ຂຶ້ນຢູ່ກັບຜົນຂອງການເຈລະຈາການຄ້າລະຫວ່າງສອງປະເທດວ່າຈະອອກມາໃນຮູບແບບໃດ. ຂະນະດຽວກັນ ການາດາກໍຍັງມີທາງເລືອກອື່ນໆເຊັ່ນກັນ ບໍ່ວ່າຈະເປັນພັນທະມິດຈາກທະວີບເອີຣົບ ຫຼື ອາຊີ.

ປັດຈຸບັນ ທ່ານ ຄານີ ກຳລັງຢູ່ລະຫວ່າງການເດີນທາງຢ້ຽມຢາມຕ່າງປະເທດ ເພື່ອເຂົ້າຮ່ວມກອງປະຊຸມສຸດຍອດຕ່າງໆໃນເອີຣົບ ແລະ ອາຊີ ພ້ອມທັງກຽມເດີນທາງຕໍ່ໄປຍັງປະເທດຈີນ ເພື່ອເຂົ້າຮ່ວມກອງປະຊຸມສຸດຍອດຄວາມຮ່ວມມືທາງເສດຖະກິດອາຊີ-ປາຊີຟິກ (APEC) ໂດຍໃນວັນອັງຄານທີ 17 ພະຈິກນີ້ ທ່ານມີກຳນົດການຫາລືທະວິພາຄີກັບປະທານາທິບໍດີ ສີ ຈິ້ນຜິງ ຜູ້ນຳຈີນ.

ທ່າທີຕໍ່ການເຈລະຈາກັບຈີນ ແລະ ເງື່ອນໄຂການລົງທຶນ:

ບໍ່ແມ່ນເກມຕໍ່ລອງ ແຕ່ເປັນການຕອບສະໜອງ: ໃນການໃຫ້ສຳພາດ ທ່ານ ຄານີ ໄດ້ຫຼີກລ່ຽງທີ່ຈະກ່າວໂດຍກົງວ່າ ທ່ານກຳລັງໃຊ້ການຫາລືເລື່ອງຍານຍົນກັບຜູ້ນຳຈີນເປັນ "ອຳນາດຕໍ່ລອງ" ກັບສະຫະລັດ ແຕ່ທ່ານເອີ້ນສະຖານະການນີ້ວ່າເປັນ "ການກະທຳ ແລະ ປະຕິກິລິຍາຕອບສະໜອງ". ພ້ອມກັນນັ້ນ ທ່ານຍັງຢ້ຳວ່າ ການາດາມີແຮງງານທີ່ມີປະສິດທິພາບ, ມີຕະຫຼາດລົດຍົນທີ່ສຳຄັນ ແລະ ມີໂຮງງານຜະລິດຂະໜາດໃຫຍ່ ເຊິ່ງຫາກສົມກະຍະພາບເຫຼົ່ານີ້ບໍ່ໄດ້ຖືກນຳມາໃຊ້ຢ່າງເຕັມທີ່ໃນອາເມຣິກາເໜືອ ການາດາກໍພ້ອມທີ່ຈະເດີນໜ້າຕໍ່ໄປບໍ່ວ່າຈະເປັນທາງໃດກໍຕາມ.

ເງື່ອນໄຂສຳລັບຄ້າຍລົດຈີນ: ທ່ານ ຄານີ ໄດ້ເນັ້ນຢ້ຳວ່າ ການຜະລິດຍານຍົນຂອງຈີນໃນປະເທດການາດາ ຈະຕ້ອງປະຕິບັດຕາມເງື່ອນໄຂທີ່ກຳນົດໄວ້ຢ່າງເຂັ້ມງວດ ເຊິ່ງລວມເຖິງການປະຕິບັດຕາມມາດຕະຖານແຮງງານຂອງການາດາ ແລະ ການນຳໃຊ້ຊິ້ນສ່ວນ ລວມທັງແຮ່ທາດສຳຄັນທີ່ຈັດຫາພາຍໃນປະເທດ.

ທັງນີ້ ຍັງບໍ່ເປັນທີ່ແນ່ຊັດວ່າ ປະທານາທິບໍດີ ທຣຳ ແລະ ນາຍົກລັດຖະມົນຕີ ຄານີ ຈະພົບປະຫາລືກັນນອກຮອບກອງປະຊຸມສຸດຍອດ APEC ຫຼື ບໍ່ ຂະນະທີ່ ທ່ານນາງ ຄລໍເດຍ ເຊນບາມ ປະທານາທິບໍດີເມັກຊິໂກ ໄດ້ເປີດເຜີຍວ່າມີແຜນຈະພົບປະກັບ ທ່ານ ຄານີ ລະຫວ່າງການເຂົ້າຮ່ວມກອງປະຊຸມ APEC ໃນຄັ້ງນີ້.

ທີ່ມາ: ສຳນັກຂ່າວອິນໂຟເຄອສ໌ / RYT9

ຂ່າວຕ່າງປະເທດ · 19:46 ໂມງ · ອ່ານ 5 ຄັ້ງ

4 ທະນາຄານກາງ ໃນອາຊຽນ ລົງນາມ ເອັມໂອຢູໃຊ້ສະກຸນເງິນທ້ອງຖິ່ນເຮັດທຸລະກຳຂ້າມຊາຍແດນ



ສຳນັກຂ່າວຊິນຮວາຂອງ ສປຈີນ, ເມື່ອບໍ່ດົນມານີ້ ທະນາຄານກາງມາເລເຊຍ, ອິນໂດເນເຊຍ, ໄທ ແລະ ຟີລິປິນ ໄດ້ຮ່ວມກັນລົງນາມ ໃນບົດບັນທຶກຄວາມເຂົ້າໃຈ (MoU) ເພື່ອສົ່ງເສີມການໃຊ້ ສະກຸນເງິນທ້ອງຖິ່ນໃນການເຮັດທຸລະກຳຂ້າມຊາຍແດນ ພາຍໃຕ້ກອບ ການເຮັດທຸລະກຳ ດ້ວຍສະກຸນເງິນທ້ອງຖິ່ນ (Local Currency Transaction - LCT).

ຖະແຫລງການຮ່ວມ ໄດ້ລະບຸວ່າ ບົດບັນທຶກຄວາມເຂົ້າໃຈສະບັບນີ້ ເປັນກອບການດຳເນີນງານຂອງທະນາຄານກາງທັງ 4 ແຫ່ງ ເພື່ອສົ່ງເສີມ ແລະ ອຳນວຍຄວາມສະດວກ ໃນການໃຊ້ສະກຸນເງິນ ທ້ອງຖິ່ນເພື່ອຊຳລະບັນຊີທຸລະກຳທະວິພາຄີ ລະຫວ່າງເຂດອຳນາດ ສານທີ່ເຂົ້າຮ່ວມ ເຊິ່ງຄອບຄຸມເຖິງການຄ້າ, ການລົງທຶນ ແລະ ທຸລະກຳອື່ນ ໆ ທີ່ຖືກຕ້ອງຕາມເງື່ອນໄຂ.

ການຂະຫຍາຍຄວາມຮ່ວມມື ໃນຄັ້ງນີ້ ມີເປົ້າໝາຍ ເພື່ອສົ່ງເສີມ ການໃຊ້ສະກຸນເງິນທ້ອງຖິ່ນ ໃນການເຮັດທຸລະກຳລະດັບ ພາກພື້ນໃຫ້ຫລາຍຂຶ້ນ, ເພີ່ມປະສິດທິພາບ ການຊຳລະ ບັນຊີຂ້າມຊາຍແດນ ແລະ ຫລຸດຜ່ອນຕົ້ນທຶນທີ່ເກີດຈາກ ການແປ່ງສະກຸນເງິນ ຫລາຍຕໍ່ ເຊິ່ງຈະຊ່ວຍໃຫ້ ພາກທຸລະກິດ ແລະ ຜູ້ມີສ່ວນກ່ຽວຂ້ອງລາຍອື່ນໆ ໃນ ຕະຫລາດສາມາດ ບໍລິຫານຈັດການ ຄວາມສ່ຽງຈາກ ອັດຕາແລກປ່ຽນ ໄດ້ຢ່າງ ທົນທານຫລາຍຂຶ້ນ.

ທະນາຄານກາງທັງ 4 ແຫ່ງ ຈະສືບ ຕໍ່ເຮັດວຽກຮ່ວມກັນ ເພື່ອຂັບເຄື່ອນການ ພັດທະນາ ແລະ ການດຳເນີນງານພາຍໃຕ້ ກອບການເຮັດທຸລະກຳ ດ້ວຍສະກຸນເງິນ ທ້ອງຖິ່ນ, ເຊິ່ງແຜນ ການລິເລີ່ມນີ້ ຈະ ຊ່ວຍຂະຫຍາຍ ຂອບເຂດການໃຊ້ສະກຸນ ເງິນທ້ອງຖິ່ນ ໃນການເຮັດທຸລະກຳ ລະດັບ ພາກພື້ນ, ສະໜັບສະໜຸນກິດຈະກຳ ທາງ ດ້ານ ເສດຖະກິດ ພ້ອມທັງເສີມສ້າງ ການ ຮ່ວມມື ແລະ ຄວາມທົນທານ ທາງດ້ານ ການເງິນໃນພາກພື້ນອີກດ້ວຍ./

ຂ່າວຕ່າງປະເທດ · 09:17 ໂມງ · ອ່ານ 5 ຄັ້ງ

ອິນໂດເນເຊຍ | ພາຍຸລົມໝຸນຄ້າຍທໍນາໂດຖະຫຼົ່ມ 2 ລັນຕິດຕໍ່ກັນ ຫຼັງຄາເຮືອນຊານ ແລະ ຮ້ານຄ້າປິວອ່ອນກາງອາກາດ ອາຄານເສຍຫາຍຈຳນວນຫຼາຍ



ວັນທີ 14–15 ພະຈິກ 2026, ປະເທດ ອິນໂດເນເຊຍປະເຊີນກັບພາຍຸລົມໝຸນຮຸນແຮງໃນ 2 ແຂວງຕິດຕໍ່ກັນ ໂດຍມີຄລິບເຜີຍໃຫ້ເຫັນກະແສລົມພັດ ຫຼັງຄາອາຄານ ແລະ ເສດວັດສະດຸປິວຂຶ້ນທ້ອງຟ້າ.

ວັນທີ 14 ພະຈິກ | ແຂວງຊາວາເວັນຕົກ: ພາຍຸລົມໝຸນຖະຫຼົ່ມເຂດຊີວີເດຍ ແລະ ປາຊີຣ໌ຈຳປຸ ເມືອງ ບັນດຸງ ເວລາປະມານ 14:30 ນາທີ ຕາມເວລາໄທ, ກະແສລົມພັດຫຼັງຄາ ແລະ ກັນສາດຮ້ານຄ້າພັງເສຍຫາຍ ບໍລິເວນຕະຫຼາດຊິເບຣອຸມ ເຈົ້າໜ້າທີ່ຢືນຢັນອາຄານ ແລະ ຮ້ານຄ້າເສຍຫາຍເບື້ອງຕົ້ນ 25 ແຫ່ງ ບໍ່ມີລາຍງານ ຜູ້ບາດເຈັບ ຫຼື ເສຍຊີວິດ.

ວັນທີ 15 ພະຈິກ | ແຂວງລຳປຸງ: ພາຍຸລົມໝຸນ ພັດຖະຫຼົ່ມໝູ່ບ້ານປາດັງຈາຍາ ເຂດລຳປຸງຕາເວັນຕົກ ຊ່ວງກາງວັນ, ຫຼັງຄາບ້ານຫຼາຍຫຼັງຖືກແຮງລົມຍົກປິວ, ຕົ້ນໄມ້ຫັກໂຄ່ນ, ປະຊາຊົນແຕກຕື່ນ ແລະ ພະຍາຍາມຫຼົບ ເສດວັດສະດຸທີ່ປິວກະຈາຍ.

ເຈົ້າໜ້າທີ່ ແລະ ປະຊາຊົນກຳລັງ ຮີບຮ້ອນກວດກາຄວາມເສຍຫາຍ ໂດຍ ເຫດການໃນວັນທີ 15 ພະຈິກ ຍັງຢູ່ ລະຫວ່າງລວບລວມຈຳນວນບ້ານເຮືອນທີ່ ໄດ້ຮັບຜົນກະທົບ.

ທີ ມ າ : World Forum ຂ່າວສານຕ່າງປະເທດ

ຂ່າວຕ່າງປະເທດ · 18:24 ໂມງ · ອ່ານ 3 ຄັ້ງ

ມຽນມາ ສົ່ງອອກເຂົ້າປະມານ 1,11 ລ້ານໂຕນ ໃນໄລຍະ 7 ເດືອນ



ສຳນັກຂ່າວຊິນຮວາຂອງ ສປຈີນ,ເມື່ອບໍ່ດົນມານີ້, ສະຫະພັນເຂົ້າແຫ່ງມຽນມາ ລາຍງານວ່າ: ປະລິມານການ ສົ່ງອອກເຂົ້າ ແລະ ເຂົ້າຫັກ ໃນໄລຍະ7 ເດືອນທຳອິດຂອງ ສົກປີງົບປະມານ 2026-2027 ໄດ້ເລີ່ມຕົ້ນໃນເດືອນ ເມສາ ລວມມີປະມານ 1,11 ລ້ານໂຕນ, ໂດຍມີລາຍໄດ້ ຈາກການສົ່ງອອກເຂົ້າປະມານ 388 ລ້ານໂດລາ ສະຫະລັດ, ຫລຸດລົງ ເມື່ອທຽບໃສ່ ໃນໄລຍະດຽວກັນ ຂອງປີຜ່ານມາ. ນອກຈາກນັ້ນ, ປະເທດ ມຽນມາຍັງ ສົ່ງອອກໄປຍັງ41 ປະເທດ ແລະ ເຂດແຄວ້ນ ໂດຍ ສະເພາະ ລິບປິນ, ຈີນ ແລະ ແບນຊິກ ແລະ ອື່ນໆ./

ຂ່າວຕ່າງປະເທດ · 16:49 ໂມງ · ອ່ານ 3 ຄັ້ງ

ໄຂກອງປະຊຸມສຸດຍອດ ຝລັ່ງໂກໂຟນີ ຄັ້ງທີ XX



ວິທະຍຸກະຈ່າຍສຽງ ຫວຽດນາມ, ວັນທີ 15 ພະຈິກ, ຢູ່ນະຄອນຫລວງ ພະນົມເປັນ, ກຳປູເຈຍ, ທ່ານ ໂຕ ເລີມເລຂາທິການໃຫຍ່, ປະທານປະເທດ ຫວຽດນາມ ໄດ້ ນຳໜ້າຄະນະຜູ້ແທນຂັ້ນສູງ ຫວຽດນາມເຂົ້າຮ່ວມວາລະໄຂ ກອງປະຊຸມສຸດຍອດ ຝລັ່ງໂຟໂກນີ ຄັ້ງທີ XX ດ້ວຍຫົວຂໍ້ “ລົງທຶນຄືນໃໝ່ ໃຫ້ແກ່ ສັນຕິພາບເພື່ອການວັດທະນາຖາ ວອນລວມ ແລະ ສະຖຽນລະພາບ ແບບຍືນຍົງ.ເຫດການ ມີການເຂົ້າຮ່ວມ ຂອງການນຳຕ່າງໜ້າເກືອບ 90 ປະເທດ, ໃນນັ້ນມີ 25 ປະມຸກ ແລະ ຜູ້ນຳໜ້າ ລັດຖະບານ, ພ້ອມ ກັບ ຜູ້ຕ່າງໜ້າ ບັນດາສຳນັກຝລັ່ງໂກໂຟນີ, ອົງການຈັດຕັ້ງ ສາກົນ ແລະ ພາກພື້ນ. ກ່າວຄຳເຫັນ ໄຂກອງປະຊຸມ, ທ່ານລຸຍສ ມູຊິກິວາໂບ(Louise Mushikiwabo)ເລ ຂາທິການໃຫຍ່ ຝລັ່ງໂກໂຟນີ ໄດ້ກ່າວເນັ້ນໜັກເຖິງຄວາມ ໝາຍ ແລະສະຖານະການການເມືອງ ຂອງຫົວຂໍ້ກອງປະ ຊຸມສຸດຍອດ ໃນສະພາບການໂລກ ມີການຜັນແປຢ່າງວ່ອງ ໄວແລະ ສັບສົນ. ທ່ານ ເລຂາທິການໃຫຍ່ ຢັ້ງຢືນວ່າ ຝລັ່ງ ໂກໂຟນີຕ້ອງເສີມຂະຫຍາຍບົດບາດ ແລະ ຄວາມຮັບຜິດຊອບ ຂອງຕົນໃຫ້ກວ່າອີກ, ບໍ່ພຽງແຕ່ ແມ່ນສະຖານທີ່ ຮ່ວມກ່ຽວກັບ ດ້ານພາສາ, ວັດທະນະທຳເທົ່ານັ້ນຫາກຍັງ ແມ່ນເວທີປາໄສ ຊຸກຍູ້ການໂອ້ລົມ ສົນທະ ນາ, ສ້າງຄວາມໄວ້ເນື້ອເຊື່ອໃຈ ແລະ ເພີ່ມ ທະວີຄວາມສະມັກຄີ ແລະການຮ່ວມມື ລະຫວ່າງ ບັນດາປະເທດ./.

(ບັນນາທິການຂ່າວ: ຕ່າງປະເທດ)
ຮຽບຮຽງ ຂ່າວໂດຍ: ສະໄຫວ ລາດປາກດີ

ຂ່າວຕ່າງປະເທດ · 16:49 ໂມງ · ອ່ານ 2 ຄັ้ง

ກອງປະຊຸມພົບປະກັບນັກທຸລະກິດ ຈີນ-ໄທ




ວິທະຍຸ ໂທລະພາບ ສູນກາງຈີນ, ວັນທີ 14 ພະຈິກນີ້ ຢູ່ນະຄອນຫລວງ ບາງກອກຂອງໄທ, ທ່ານ ຫລີ ສຽງນາຍົກລັດຖະມົນຕີຈີນ ແລະ ທ່ານ ອະນຸທິນ ຊານວີ ຣະກູນ ນາຍົກລັດຖະມົນຕີໄທໄດ້ເຂົ້າຮ່ວມ ກອງປະຊຸມ ພົບປະກັບ ນັກທຸລະກິດຈີນ-ໄທ. ພາຍຫລັງ ໄດ້ຮັບຟັງຄຳ ເຫັນ ຂອງຜູ້ຕ່າງໜ້າ ຈາກວົງການວິສາຫະກິດ ຂອງສອງ ປະເທດ, ທ່ານ ຫລີສຽງ ກ່າວວ່າ: ປັດຈຸບັນ, ສປ ຈີນ ແລະ ໄທ ພວມຮ່ວມກັນສ້າງ 5 ທິດສະວັດ ຄຳໃໝ່ແຫ່ງ ສາທະນຳ” ແລະ ຫັນຈາກ “ຂອບສອງ ຝ່າຍ” ໄປສູ່ “ການເຜີຍແຜ່ໄປ ສູ່ ທ້ອງຖິ່ນ”. ລັດ ຖະບານຈີນ ແລະ ໄທຈະ ສຸມຄວາມພະຍາຍາມ ຢ່າງຕັ້ງໜ້າເພື່ອ ສະໜອງສະພາບແວດລ້ອມ ການດຳເນີນ ທຸລະກິດ ທີ່ດີໃຫ້ແກ່ ວິສາຫະກິດຂອງ ສອງປະເທດເພື່ອຊຸກຍູ້ໃຫ້ ວິສາຫະກິດໄປ ລົງທຶນ ເຊິ່ງກັນ ແລະ ກັນ ຢ່າງເລິກເຊິ່ງ ເພື່ອການພັດທະນາ ໃນໄລຍະຍາວ. ທ່ານ ອະນຸທິນ ກ່າວວ່າ: ສປ ຈີນ ເປັນຄູ່ການຄ້າ ສຳຄັນ ທີ່ສຸດຂອງໄທ, ໄທຫວັງຈະຫັນການ ພົວພັນກັບ ສປ ຈີນ ຈາກຄູ່ການ ຄ້າ ທົ່ວໄປ ໃຫ້ກາຍເປັນຄູ່ການຄ້າໃນໄລຍະ ຍາວ ທີ່ມີການພັດທະນາຮ່ວມກັນແລະ ບັນລຸຜົນສຳເລັດຮ່ວມກັນ, ພ້ອມທັງ ຈະ ຂະຫຍາຍການຮ່ວມມືກັບ ສປ ຈີນ ໃນຂົງ ເຂດຕ່າງໆ ຕື່ມອີກ ເຊັ່ນ: ລົດໄຟ ຟ້າ, ກະ ສິກຳ, ການລົງທຶນ, ການເຊື່ອມໂຍງເຊື່ອມ ຈອດ ແລະ ອື່ນໆ. ໄທ ຈະນຳໃຊ້ ນະໂຍບາຍແລະມາດຕະການຫລາຍກວ່າ ເກົ່າ ເພື່ອສະໜອງເງື່ອນໄຂທີ່ດີ ໃນການ ດຳເນີນ ທຸລະກິດ ໃນໄລ ຍະຍາວ ໃຫ້ແກ່ ວິສາຫະກິດຈີນ. ຜູ້ຕ່າງໜ້າວິສາຫະກິດ ສອງປະເທດ ໃຫ້ຮູ້ວ່າ:ເຂົາເຈົ້າ ມີຄວາມ ໝັ້ນໃຈຢ່າງເຕັມປ່ຽມ ຕໍ່ມິດຕະພາບຈີນ-ໄທ ແລະຍິນດີ ທີ່ຈະປະກອບສ່ວນເຂົ້າ ໃນການພັດທະນາ ແລະຄວາມຈະເລີນຮຸ່ງ ເຮືองຂອງສອງປະເທດ ດ້ວຍຜົນສຳເລັດ ຕົວຈິງ ຫລາຍກວ່າເກົ່າ./.

(ບັນນາທິການຂ່າວ: ຕ່າງປະເທດ)
ຮຽບຮຽງ ຂ່າວໂດຍ: ສະໄຫວ ລາດປາກດີ

ລາຄານ້ຳມັນ, ເງິນ, ຄຳ, ຫວຍ ແລະ ອາກາດ — ສົດທຸກມື້
ເບິ່ງຕົວເລກລ່າສຸດ ທີ່ mahaxan.com/today · ໜ້າ 20 ໃນສະບັບນີ້

ຂ່າວຕ່າງປະເທດ · 16:19 ໂມງ · ອ່ານ 2 ຄັ້ງ

ສປ ຈີນ-ອາຊຽນ ພວມລົງສູ່ລວງເລິກຢ່າງບໍ່ຢຸດຢັ້ງ



ວິທະຍຸ ໂທລະພາບ ສູນກາງຈີນ, ໃນຖານະເປັນປະຕູເປີດ ສູ່ອາຊຽນ, ການຮ່ວມມື ແລະ ແລກປ່ຽນລະຫວ່າງ ທ່າກຳປັ່ນຕູ້ບັນທຸກສິນຄ້າ ແບບອັດຕະໂນມັດ ນະຄອນຊິນໂจ่ว ເຂດປົກຄອງຕົນເອງ ເຜົ່າจ้วงກວາງຊີ ຂອງ ສປ ຈີນ ກັບບັນດາປະເທດ ສະມາຊິກອາຊຽນ ພວມລົງສູ່ລວງເລິກຢ່າງບໍ່ຢຸດຢັ້ງ.ມາຮອດ ປັດຈຸບັນ, ໃນບັນດາເສັ້ນທາງການເດີນເຮືອ ການຄ້າຕ່າງປະເທດ ທີ່ຜ່ານ ທ່າ ກຳປັ່ນຊິນໂจ่ว ມີເສັ້ນທາງເດີນເຮືອສູ່ ປະເທດສະມາຊິກອາຊຽນ 23 ເສັ້ນ, ເຄືອຂ່າຍການເດີນເຮືອການຄ້າຕ່າງປະເທດ ທີ່ສາມາດໄປເຖິງ ຈຸດໝາຍປາຍທາງໂດຍກົງກວ່າ 100 ແຫ່ງ, ເຊື່ອມຕໍ່ ທ່າກຳປັ່ນ ຫລັກ ຂອງ ບັນດາປະເທດ ສະມາຊິກ ອາຊຽນ, ພ້ອມກັນນັ້ນ ກໍໄດ້ເປີດເສັ້ນທາງ ທະເລໄກສູ່ ອິນເດຍ, ເຊິ່ງເປີດເສັ້ນທາງຂົນສົ່ງສິນຄ້າ ຂ້າມຊາຍແດນ ຈາກອາຊີຕາເວັນອອກສຽງໃຕ້ ສູ່ອາຊີໃຕ້, ເສັ້ນທາງ ເດີນເຮືອພາຍໃນ ແລະ ຕ່າງປະເທດຊ່ວຍຊຸຍ້ຳໝູນກັນ, ສະໜອງ ການສະໜັບສະໜູນ ດ້ານການເດີນເຮືອ ທີ່ເຂັ້ມແຂງໃຫ້ແກ່ ການລວບລວມແຫລ່ງສິນຄ້າ ຕູ້ບັນທຸກ.ຫລັງຈາກ ຄອງຜິງລູ້ ເປີດບໍລິການ ແລ້ວ, ສິນຄ້າຈາກພາກຕາເວັນຕົກ ສຽງໃຕ້ ທີ່ຂົນສົ່ງອອກ ທາງທະເລຜ່ານ ຄອງຜິງລູ້, ເມື່ອທຽບກັບການຂົນສົ່ງ ອອກ ສູ່ທະເລ ຜ່ານສາມຫລ່ຽມແມ່ນ້ຳຈູ່ຈຽງ, ສາມາດຫຼຸດໄລຍະທາງ ການເດີນເຮືອ ໃນ ແມ່ ນ້ຳລີງ ໄດ້ປະມານ 560 ກິໂລແມັດ, ເຮັດໃຫ້ບ່ອນນີ້ ກາຍເປັນເສັ້ນທາງຂົນສົ່ງ ທາງນ້ຳ ທີ່ມີໄລຍະທາງສັ້ນທີ່ສຸດ, ປະຢັດ ທີ່ສຸດ ແລະ ສະດວກທີ່ສຸດ ຈາກພາກ ຕາເວັນຕົກ ສຽງໃຕ້ຂອງ ສປ ຈີນ ສູ່ອາ ຊຽນ.ສຳລັບ ວິສາຫະກິດທີ່ກ່ຽວຂ້ອງ ແລ້ວ, ເສັ້ນທາງການເດີນເຮືອໄດ້ປ່ຽນຈາກ "ໂຄ້ງໄປທາງທິດຕາເວັນອອກ" ກາຍ ມາເປັນ "ລົງໃຕ້ໂດຍກົງ", ໄລຍະທາງການ ເດີນເຮືອສັ້ນເຂົ້າຢ່າງຫລວງ ຫລາຍ, ເວລາ ເດີນ ເຮືອກໍ ຫລຸດລົງ, ຕົ້ນທຶນສັງລວມ ກໍ ຫລຸດລົງ, ສ້າງເງື່ອນໄຂທີ່ດີກວ່າເກົ່າ ໃຫ້ ແກ່ ວິສາຫະກິດ ໃນການເປີດກວ້າງ ຕະຫລາດຢູ່ອາຊຽນ./.

(ບັນນາທິການຂ່າວ: ຕ່າງປະເທດ)
ຮຽບຮຽງ ຂ່າວໂດຍ: ສະໄຫວ ລາດປາກດີ

ໂຄສະນາ

ບໍ່ມີເວລາອ່ານ? ກົດຟັງໄດ້ເລີຍ

ທຸກຂ່າວໃນ mahaxan.com ມີສຽງອ່ານພາສາລາວ — ຟັງຂະນະຂັບລົດ ຫຼື ເຮັດວຽກ. ເປີດຂ່າວໃດກໍໄດ້ ແລ້ວກົດ ▶ ຟັງ.

ຮັບ ມະຫາສານ ລາຍວັນ ທາງອີເມວ ຟຣີ

ໜັງສືພິມສະບັບໃໝ່ ສົ່ງເຖິງອີເມວທ່ານ ທຸກເຊົ້າ ກ່ອນເຂົ້າວຽກ. ສະແກນ QR ຫຼື ເຂົ້າ mahaxan.com/newspaper

ໂຄສະນາ

EMERGING DIGITAL SOLUTIONS

ແນວຄິດ → ອອກແບບ → ເປີດໃຊ້ງານ

ຮັບອອກແບບ ແລະ ພັດທະນາ ເວັບໄຊທ໌ · ແອັບ · ລະບົບທຸລະກິດ

ທ່ານມີແນວຄິດ?
ພວກເຮົາຊ່ວຍສ້າງໃຫ້ເປັນຈິງ

ບໍ່ວ່າທ່ານຢາກເຮັດລະບົບຫຍັງ , ພວກເຮົາຊ່ວຍໃຫ້ຄຳປຶກສາ ແລະ ສ້າງໃຫ້ເປັນຈິງໄດ້



ມະຫາສານ ມື້ນີ້: ນ້ຳມັນ, ເງິນ, ຄຳ, ຫວຍ, ອາກາດ

ວັນອັງຄານ 17 ພະຈິກ 2026 · ສະບັບທີ 023

ສະໜັບສະໜຸນໂດຍ [ແບຣນຂອງທ່ານ] · ພື້ນທີ່ນີ້ວ່າງ — ໜ້າຂໍ້ມູນທີ່ຄົນເປີດເບິ່ງທຸກມື້ WhatsApp 020 5888 6182

ລາຄານ້ຳມັນ 18 ແຂວງ

ກີບ/ລິດ · ມີຜົນ 12/11/2026

ແຂວງ	ແອັດຊັ່ງ 95	ທຳມະດາ 91	ກາຊວນ
ນະຄອນຫຼວງວຽງຈັນ	**▼ 37,360**	**▼ 32,330**	**▼ 32,400**
ແຂວງວຽງຈັນ	▼ 37,360	▼ 32,330	▼ 32,400
ຜົ້ງສາລີ	▼ 38,350	▼ 33,320	▼ 33,390
ຫຼວງນ້ຳທາ	▼ 37,850	▼ 32,830	▼ 32,890
ອຸດົມໄຊ	▼ 38,030	▼ 33,000	▼ 33,070
ບໍ່ແກ້ວ	▼ 37,460	▼ 32,430	▼ 32,500
ຫຼວງພະບາງ	▼ 37,870	▼ 32,840	▼ 32,910
ຫົວພັນ	▼ 37,870	▼ 32,840	▼ 32,910
ໄຊຍະບູລີ	▼ 37,680	▼ 32,660	▼ 32,730
ຊຽງຂວາງ	▼ 37,560	▼ 32,520	▼ 32,590
ໄຊສົມບຸນ	▼ 37,780	▼ 32,750	▼ 32,830
ບໍລິຄຳໄຊ	▼ 37,410	▼ 32,380	▼ 32,450
ຄຳມ່ວນ	▼ 37,390	▼ 32,360	▼ 32,430
ສະຫວັນນະເຂດ	▼ 37,390	▼ 32,360	▼ 32,430
ສາລະວັນ	▼ 37,640	▼ 32,620	▼ 32,690
ເຊກອງ	▼ 37,640	▼ 32,610	▼ 32,690
ຈຳປາສັກ	▼ 37,420	▼ 32,390	▼ 32,460
ອັດຕະປື	▼ 37,690	▼ 32,660	▼ 32,730

ແຫຼ່ງ: ລາຍການລາຄາ ລັດວິສາຫະກິດນ້ຳມັນເຊື້ອໄຟລາວ · mahaxan.com/today/fuel · ▲ ຂຶ້ນ ▼ ລົງ ທຽບກັບລາຄາກ່ອນ (22/10)

ປະຕິທິນ

ວັນສຳຄັນ ທີ່ໃກ້ມາເຖິງ

17/11		ວັນພຣະ
24/11		ວັນພຣະ · ບຸນນະມັດສະການ ພຣະທາດຫຼວງວຽງຈັນ
02/12		ວັນສະຖາປະນາ ສປປ ລາວ · ວັນພຣະ
09/12		ວັນພຣະ

ໂຄສະນາ

ລົງໂຄສະນາ ໃນ ມະຫາສານ ລາຍວັນ

ໜັງສືພິມ PDF ປະຈຳວັນ · ຈອງເປັນລາຍວັນ, ລາຍອາທິດ ຫຼື ລາຍເດືອນ · ທີມງານອອກແບບໃຫ້ຟຣີ

WhatsApp 020 5888 6182

ອັດຕາແລກປ່ຽນ

ກີບ · BCEL 16/11/2026

ສະກຸນເງິນ	ຊື້ (ເງິນສົດ)	ຂາຍ
USD ໂດລາ ສະຫະລັດ	▲ 22,298	▲ 22,638
THB ບາດ ໄທ	▼ 666.63	▼ 679.94
CNY ຢວນ ຈີນ	▼ 3,330	▼ 3,396
EUR ເອີໂຣ	▼ 24,561	▼ 25,051
VND ດົ່ງ ຫວຽດນາມ	0.86	0.87
JPY ເຢັນ ຍີ່ປຸ່ນ	▼ 139.20	▼ 141.98
SGD ໂດລາ ສິງກະໂປ	▲ 17,104	▲ 17,776
GBP ປອນ ອັງກິດ	▼ 29,423	▼ 30,007

ສະເລ່ຍທະນາຄານ (ທຫລ): USD ຊື້ 22,414 · ຂາຍ 22,637 · ▲ ຂຶ້ນ ▼ ລົງ ທຽບກັບມື້ກ່ອນ

ລາຄາຄຳ

ກີບ · ຂາຍ

ຄຳແທ່ງ 1 ບາດ

43,200,000

▲ 50,000

ຄຳແທ່ງ 99.99% · 1 ກຣາມ

2,854,800

▼ 43,400

ອັບເດດ 17/11 05:15 · mahaxan.com/today/gold

ຫວຍພັດທະນາ

ງວດ 197

ອອກວັນທີ 16/11/2026

460071

ງວດ 196 · 13/11	290900
ງວດ 195 · 12/11	189836
ງວດ 194 · 11/11	522193
ງວດ 193 · 10/11	173546

ພະຍາກອນອາກາດ

ວັນອັງຄານ 17 ພະຈິກ 2026

ເມືອງ	ຕ່ຳ–ສູງ	ສະພາບ
ວຽງຈັນ	23.2–32.0°C	ມີຝົນ
ຫຼວງພະບາງ	21.5–30.5°C	ມີຝົນ
ໂພນສະຫວັນ	16.5–27.0°C	ມີຝົນ
ຊຳເໜືອ	16.1–26.1°C	ຝົນຕົກໜັກ
ສະຫວັນນະເຂດ	24.0–33.2°C	ເມກບາງສ່ວນ
ປາກເຊ	24.1–33.0°C	ເມກບາງສ່ວນ

ແຫຼ່ງ: MET Norway · ຂໍ້ມູນສົດ: mahaxan.com/today

ຕົວເລກປ່ຽນທຸກມື້ — ເບິ່ງສົດ

ລາຄານ້ຳມັນ, ເງິນ, ຄຳ, ຫວຍ ແລະ ອາກາດ ອັບເດດສົດ ທີ່ mahaxan.com/today

ໂຄສະນາ

ເຂົ້າເຖິງຜູ້ອ່ານຄົນລາວ ທຸກເຊົ້າ

ໜ້າຫຼັງ ແມ່ນໜ້າທີ່ເຫັນທຸກຄັ້ງທີ່ປິດໜັງສືພິມ. ຈອງເປັນລາຍວັນ, ລາຍອາທິດ ຫຼື ລາຍເດືອນ · ທີມງານອອກແບບໃຫ້ຟຣີ.

ເບິ່ງລາຄາ: mahaxan.com/media-kit

ຮັບ ມະຫາສານ ລາຍວັນ ທາງອີເມວ ຟຣີ

ໜັງສືພິມສະບັບໃໝ່ ສົ່ງເຖິງອີເມວທ່ານ ທຸກເຊົ້າ ກ່ອນເຂົ້າວຽກ. ສະແກນ QR ຫຼື ເຂົ້າ mahaxan.com/newspaper

ມະຫາສານ ລາຍວັນ ຈັດພິມໂດຍ ມະຫາສານ (mahaxan.com) · 302/3B ຊັ້ນ 3 ອາຄານວຽງວັງ, ຖະໜົນບໍລິຈັນ, ນະຄອນຫຼວງວຽງຈັນ · info@mahaxan.com · WhatsApp +856 20 5888 6182
ຂ່າວໃນສະບັບນີ້ ເຜີຍແຜ່ໃນ mahaxan.com ວັນຈັນ 16 ພະຈິກ 2026. ສຳເນົາ PDF ນີ້ໃຫ້ໝູ່ໄດ້ຟຣີ ໂດຍບໍ່ດັດແກ້ເນື້ອໃນ.